

# ປະຊາຊົນ


ວັນພະຫັດ 23 ພຶດສະພາ 2024
ແຮມ 1 ຄ່ຳເດືອນ 6 ພສ 2567
ປີທີ 73 ສະບັບທີ 14.478

ສຽງຂອງສູນກາງພັກ ປະຊາຊົນ ປະຕິວັດລາວ
ຖະໜົນກຳແພງເມືອງ ນະຄອນຫຼວງວຽງຈັນ ໂທລະສັບ: 021 336111 ແຟັກ: 021 336113
ຕູ້ ປ.ນ 1110 http://www.pasaxon.org.la E-mail: pasaxonn@yahoo.com

ລາຄາ 4.500 ກີບ


## ພັກ ປປ ລາວ



ເສີມຂະຫຍາຍທຸກຄວາມອາດສາມາດ ແລະ ທ່າແຮງບົ່ມຊ້ອນ, ສ້າງການຜະລິດ ແລະ ບໍລິການໃຫ້ເຂັ້ມແຂງ, ຮັບປະກັນການພັດທະນາແບບຍືນຍົງ ແລະ ເປັນເຈົ້າຕົນເອງ.

## ສນຊ ແລະ ກຸ່ມບໍລິສັດ ພົງສະຫວັນ ສືບຕໍ່ຮ່ວມມືກອງທຶນສາມັກຄີ ແລະ ພັດທະນາແນວລາວສ້າງຊາດ




ສູນກາງແນວລາວສ້າງຊາດ (ສນຊ) ແລະ ກຸ່ມບໍລິສັດ ພົງສະຫວັນ ຈຳກັດ ໄດ້ຈັດພິທີລົງນາມບົດບັນທຶກຊ່ວຍຈຳການຮ່ວມມືດຳເນີນໂຄງການກອງທຶນສາມັກຄີ ແລະ ພັດທະນາແນວລາວສ້າງຊາດ ໃນວັນທີ 21 ພຶດສະພາຜ່ານມາ, ທີ່ ສນຊ ໄລຍະ 2 (ປີ 2025-2029); ຮ່ວມລົງນາມຄັ້ງນີ້ລະຫວ່າງ ທ່ານ ຄຳໄຫຼ ສີປະເສີດ ກຳມະການສູນກາງພັກ ຮອງປະທານສູນກາງແນວລາວສ້າງຊາດ ແລະ ທ່ານ ຄຳຫຼ້າ ລໍລອນສີ ຮອງປະທານກຸ່ມບໍລິສັດ ພົງສະຫວັນ ຈຳກັດ; ທ່ານ ດາວຽງສັກ ຫວ່າງວິຈິດ ຫົວໜ້າຫ້ອງການສູນກາງແນວລາວສ້າງຊາດ ແລະ ທ່ານພົນໂທ ຄຳຜາຍ ຈັນສີສະໝຸດ ຕາງໜ້າກຸ່ມບໍລິສັດພົງສະຫວັນ ຈຳກັດ ໂດຍການເປັນກຽດເຂົ້າຮ່ວມຂອງ ທ່ານ ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ ປະທານສູນກາງແນວລາວສ້າງຊາດ ພ້ອມດ້ວຍຄະນະຜູ້ບໍລິຫານຂັ້ນສູງກຸ່ມບໍລິສັດ ພົງສະຫວັນ ຈຳກັດຄະນະຊີ້ນຳຈັດຕັ້ງປະຕິບັດໂຄງການກອງທຶນບ້ານສາມັກຄີ ແລະ ພັດທະນາແນວລາວສ້າງຊາດຂັ້ນສູນກາງ ແລະ ບັນດາແຂວງທີ່ມີກອງທຶນເຂົ້າຮ່ວມເປັນສັກຂີພິຍານ.

ການລົງນາມຄັ້ງນີ້ ເພື່ອສືບຕໍ່ຂະຫຍາຍກອງທຶນສາມັກຄີ ແລະ ພັດທະນາແນວລາວສ້າງຊາດໃນທົ່ວປະເທດ ແລະ ປັບປຸງໃຫ້ມີປະສິດທິຜົນກວ່າເກົ່າ; ເພື່ອສືບຕໍ່ເພີ່ມທະວີການຮ່ວມມືທັງສອງຝ່າຍ

ຕໍ່ໜ້າ 2

## ລັດຖະບານ ປະດັບຫຼຽນໄຊມິດຕະພາບ ໃຫ້ກົງສູນກິດຕິມະສັກຂອງ ສປປ ລາວ ປະຈຳ ລີບັງ

ໃນວັນທີ 21 ພຶດສະພານີ້, ທີ່ກະຊວງການຕ່າງປະເທດ, ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ໄດ້ໃຫ້ການຕ້ອນຮັບ ແລະ ຕາງໜ້າລັດຖະບານລາວ ປະດັບຫຼຽນໄຊມິດຕະພາບ ໃຫ້ ທ່ານ ຊັກຢູ ເຊັບ ໂຮກາແຍມ ກົງສູນກິດຕິມະສັກ ຂອງ ສປປ ລາວ ປະຈຳ ລີບັງ ເພື່ອເປັນການຍ້ອງຍໍຊົມເຊີຍ ແລະ ສັນລະເສີນຕໍ່ຜົນງານໃນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນ ແລະ

ຕໍ່ໜ້າ 2



## ສານສະແດງຄວາມເສົ້າສະຫຼົດໃຈ

ວັນທີ 20 ພຶດສະພາຜ່ານມາ, ພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສົ່ງສານສະແດງຄວາມເສົ້າສະຫຼົດໃຈ ເຖິງພະນະທ່ານ ອາຢາໂຕລາ ອາລີ ຄາເມເນອີ ຜູ້ນຳສູງສຸດແຫ່ງສາທາລະນະລັດ ອິສລາມ ອີຣານ ທີ່ ເຕເຮຣານ ຊຶ່ງມີເນື້ອໃນວ່າ: ພະນະທ່ານ, ຂ້າພະເຈົ້າ ຮູ້ສຶກເສົ້າໃຈເປັນຢ່າງຍິ່ງ ທີ່ໄດ້ຊາບຂ່າວກ່ຽວກັບການເສຍຊີວິດ ຂອງ ພະນະທ່ານ ເອບຣາຮິມ ໄຣຊີ ປະທານາທິບໍດີ ແລະ ພະນະທ່ານ ຮຸດເຊນ ອາມີ ອັບດຸນລາຮຽນ ລັດຖະມົນຕີ ກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ອິສລາມ ອີຣານ ພ້ອມດ້ວຍ ຄະນະຕິດຕາມ ໃນເຫດການຍົນຕົກ ຢູ່ພາກຕາເວັນຕົກສ່ຽງເໜືອ ຂອງອີຣານ ໃນວັນທີ 19 ພຶດສະພາຜ່ານມາ.

ຕາງໜ້າລັດຖະບານ ແລະ ປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຄືໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງຄວາມເສົ້າສະຫຼົດໃຈ ແລະ ເຫັນໃຈຢ່າງສຸດຊຶ້ງ ມາຍັງ ພະນະທ່ານ ແລະ ໂດຍຜ່ານ ພະນະທ່ານ ໄປຍັງ ລັດຖະບານ, ປະຊາຊົນ ແຫ່ງ ສາທາລະນະລັດ ອິສລາມ ອີຣານ ແລະ ຄອບຄົວ, ຍາດຕິພີ່ນ້ອງ ຂອງ ພະນະທ່ານ ເອບຣາຮິມ ໄຣຊີ ແລະ ຜູ້ໄດ້ຮັບເຄາະຮ້າຍຈາກເຫດການໃນຄັ້ງນີ້.

ຂໍໃຫ້ດວງວິນຍານ ຂອງ ພະນະທ່ານ ເອບຣາຮິມ ໄຣຊີ, ພະນະທ່ານ ຮຸດເຊນ ອາມີ ອັບດຸນລາຮຽນ ແລະ ຜູ້ເສຍຊີວິດທັງໝົດ ຈົ່ງໄປສູ່ສຸຄະຕິ ດ້ວຍເທີ້ນ.

## ກອງປະຊຸມສົນທະນາບັນຫາເງິນເຟີ້ ແລະ ມາດຕະການແກ້ໄຂ



ຕໍ່ໜ້າ 2

## ລາວ - ກຸ້ຍໂຈວ ປຶກສາຫາລື ຮ່ວມມືດ້ານເສດຖະກິດ ການຄ້າ ແລະ ທ່ອງທ່ຽວ

ກອງປະຊຸມຮ່ວມມືດ້ານເສດຖະກິດ, ການຄ້າ, ວັດທະນະທຳ ແລະ ທ່ອງທ່ຽວ ລະຫວ່າງ ສປປ ລາວ ແລະ ແຂວງກຸ້ຍໂຈວ ສປ ຈີນ ໄດ້ຈັດຂຶ້ນໃນວັນທີ 20 ພຶດສະພາຜ່ານມາ, ທີ່ໂຮງແຮມແລນມາກ ແມ່ຂອງຣິເວີໄຊ, ນະຄອນຫຼວງວຽງຈັນ ໂດຍມີ ທ່ານ ອຸເດດ ສຸວັນນະວົງ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ທ່ານ ຫຼີ ປິງຈິນ ເຈົ້າແຂວງກຸ້ຍໂຈວ ສປ ຈີນ, ມີພາກທຸລະກິດຈາກ ສປປ ລາວ ແລະ ແຂວງກຸ້ຍໂຈວ ເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການແນະນຳກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ການຮ່ວມມືດ້ານເສດຖະກິດ, ການຄ້າ, ວັດທະນະທຳ ແລະ ການທ່ອງທ່ຽວລະຫວ່າງ ແຂວງ ກຸ້ຍໂຈວ ສປ ຈີນ ກັບ ສປປ ລາວ ໃນໄລຍະຜ່ານມາ ແລະ ທິດທາງແຜນການຮ່ວມມືໃນຕໍ່ໜ້າ. ພ້ອມນີ້, ບັນດານັກທຸລະກິດຂອງສອງຝ່າຍໄດ້ນຳສະເໜີກ່ຽວກັບສະພາບການດຳເນີນທຸລະກິດພາຍໃນບໍລິສັດຂອງຕົນ, ພ້ອມທັງມີການແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ. ໃນນີ້, ນັກທຸລະກິດຝ່າຍລາວໄດ້ສະເໜີຫຼາຍບັນຫາຕໍ່ແຂວງກຸ້ຍໂຈວ ໂດຍສະເພາະການຍົກເວັ້ນພາສີສິນຄ້ານຳເຂົ້າຈາກລາວ,

ຕໍ່ໜ້າ 2

## ພ້ອມກັນກຳຈັດແຫຼ່ງເພາະພັນໜອນນ້ຳຍຸງລາຍ



ລັດຖະບານ ກໍຄືຂະແໜງສາທາລະນະສຸກໃນທົ່ວປະເທດ ຍາມໃດກໍເຫັນຄວາມສຳຄັນຕໍ່ສຸຂະພາບຂອງປະຊາຊົນ ກໍຄືທຸກໆຄົນໃນສັງຄົມ ໂດຍສະເພາະໃນໄລຍະລະດູຝົນລະຫວ່າງ ເດືອນມິຖຸນາ ຫາ ເດືອນກັນຍາ ຂອງແຕ່ລະປີພະຍາດທີ່ມັກເກີດຂຶ້ນ ແມ່ນພະຍາດໄຂ້ຍຸງລາຍ ຈຶ່ງເຮັດໃຫ້ ຫຼາຍພາກສ່ວນກ່ຽວຂ້ອງໄດ້ຈັດຂະບວນການກຳຈັດແຫຼ່ງເພາະພັນໜອນນ້ຳຍຸງລາຍຢູ່ໃນຊຸມຊົນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ແນໃສ່ປ້ອງກັນການແຜ່ລະບາດຂອງພະຍາດໄຂ້ຍຸງລາຍໃນໄລຍະດັ່ງກ່າວ ໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ.

ດັ່ງທີ່ທ່ານຮູ້ແລ້ວວ່າປັດຈຸບັນບາງມື້ອາກາດຮ້ອນອົບເອົ້າ, ບາງມື້ມີຝົນຕົກເຮັດໃຫ້ໜ້າດິນມີຄວາມຊຸ່ມຊື້ນ ສິ່ງສຳຄັນຝົນຕົກຍັງພາໃຫ້ເກີດມີນ້ຳອັ່ງ-ຂັງຕາມພາຊະນະຕ່າງໆ ຊຶ່ງເປັນໂອກາດດີ ແກ່ການວາງໄຂ່ຂອງໂຕຍຸງ ພາໃຫ້ເກີດການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ. ສະນັ້ນ, ທົ່ວສັງຄົມຈຶ່ງພ້ອມກັນກຳຈັດແຫຼ່ງເພາະພັນ

ຕໍ່ໜ້າ 2

## ກົມມໍຣະດົກ ຢັ້ງຢືນພະພຸດທະຮູບທີ່ຄົ້ນພົບ ຢູ່ເມືອງຕົ້ນເຜີ້ງ ເປັນພະເກົ່າແກ່ຫຼາຍຮ້ອຍປີ

ກົມມໍຣະດົກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ໄດ້ຢັ້ງຢືນໃນວັນທີ 21 ພຶດສະພາ ຜ່ານມາວ່າ: ພະພຸດທະຮູບທີ່ຄົ້ນພົບຢູ່ດອນເຜີ້ງຄຳ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ ທັງອົງໃຫຍ່ ແລະ ອົງນ້ອຍ ແມ່ນພະພຸດທະຮູບເກົ່າແກ່ຂອງແທ້ 100%, ແມ່ນພະຢູ່ວັດທີ່ນອນຢູ່ໃນປະຫວັດສາດມາຫຼາຍ 100 ປີ, ບໍ່ແມ່ນການເສກສັນປັ້ນແຕ່ງ ແລະ ສ້າງສະຖານະການເອົາພະພຸດທະຮູບໄປຝັງໄວ້ເພື່ອສ້າງກະແສ ເພື່ອຍົກສູງລາຄາພະເກົ່າແກ່ຂຶ້ນແຕ່ຢ່າງໃດ.

ທ່ານ ທອງລິດ ຫຼວງໂຄດ ຮອງຫົວໜ້າກົມມໍຣະດົກ ກະຊວງ ຖວທ ທັງເປັນນັກບູຮານວິທະຍາໄດ້ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ຕໍ່ກັບທາງສຽງສັງຄົມວິພາກວິຈານວ່າ: ພະພຸດທະຮູບທີ່ຄົ້ນພົບຢູ່ດອນເຜີ້ງຄຳ ໂດຍສະເພາະພະເຈົ້າໃຫຍ່ປາງຊະນະມານທອງສຳລິດ ຫຼືເອີ້ນວ່າພະປະທານອົງໃຫຍ່ທີ່ສຸດທີ່ຄົ້ນພົບໃນວັນທີ 16 ພຶດສະພາຜ່ານມາ ເປັນການສ້າງກະແສບໍ່ແມ່ນພະເກົ່າແກ່ແທ້. ຕໍ່ກັບຄວາມຄິດເຫັນດັ່ງກ່າວ, ກົມມໍຣະດົກຢັ້ງຢືນວ່າພະທີ່ຄົ້ນພົບທຸກອົງທັງອົງນ້ອຍ ແລະ ອົງໃຫຍ່ແມ່ນພະເກົ່າແກ່, ແມ່ນພະຢູ່ວັດທີ່ນອນຢູ່ໃນປະຫວັດສາດມາຫຼາຍ 100 ປີ, ນອນຢູ່ໃນຮ່ອງຮອຍວິຫານທີ່ເກົ່າແກ່ທີ່ປະດັບດ້ວຍເສົາວິຫານ ແລະ ພະທາດທີ່ໂອບດ້ວຍແຜ່ນທອງແດງ ເປັນສິລະປະທີ່ມີ

ຕໍ່ໜ້າ 2

## ນວ ກຽມສອບເສັງຈົບຊັ້ນສາຍສາມັນສຶກສາ ປ5 ມ4 ແລະ ມ7



ນະຄອນຫຼວງວຽງຈັນ (ນວ) ກະກຽມສອບເສັງພາກຮຽນທີ II ຈົບຊັ້ນສາຍສາມັນສຶກສາ ປ5, ມ4 ແລະ ມ7 ປະຈຳສົກຮຽນ 2023-2024 ທົ່ວ ນວ, ທ່ານ ສົມພອນ ສອນດາລາ ຫົວໜ້າພະແນກສຶກສາທິການ ແລະ ກິລາ ນວ ໄດ້ລາຍງານໃຫ້ຮູ້ໃນວັນທີ21 ພຶດສະພາຜ່ານມາວ່າ: ທົ່ວ ນວ ມີໂຮງຮຽນປະຖົມທັງໝົດ581 ແຫ່ງ. ໃນນັ້ນ, ໂຮງຮຽນເອກະຊົນ197 ແຫ່ງ, ໂຮງຮຽນລັດ384ແຫ່ງ, ໂຮງຮຽນທີ່ມີຊັ້ນ ປ5 ມີ 548 ແຫ່ງ, ມີນັກຮຽນທັງໝົດ 15.869 ຄົນ, ຍິງ 7.807 ຄົນ,

ຕໍ່ໜ້າ 2

## ຂ່າວ ແລະ ບົດເຫດການເດັ່ນ


1. ປາຖະກະຖາວັນຜ່າວົງປິດລ້ອມ ... ໜ້າ 3
2. ທ່ານ ໂຕເລີນ ສາບານຕົວ ... ໜ້າ 11


**ເສີມຂະຫຍາຍມູນເຊື້ອແຫ່ງການນຳພາຂອງພັກ ເຂົ້າໃນການຈັດຕັ້ງປະຕິບັດພາລະກິດປ່ຽນແປງໃໝ່ ຢ່າງແຂງແຮງ ແລະ ເລິກເຊິ່ງ**

# ວຽງພູຄາ ເຊັນສັນຍາໂຄງການສ້ອມແປງເສັ້ນທາງເລກທີ 1505 ໄລຍະທີ 1 ແລະ ໄລຍະທີ 2




ພິທີເຊັນສັນຍາໂຄງການສ້ອມແປງເສັ້ນທາງເລກທີ 1505 ໄລຍະທີ 1 ແລະ ໄລຍະທີ 2 ລະຫວ່າງຫ້ອງການໂຍທາທິການ ແລະ ຂົນສົ່ງ (ຍທຂ) ເມືອງວຽງພູຄາ ແຂວງຫຼວງນ້ຳທາ ເຈົ້າຂອງໂຄງການກັບບໍລິສັດ ໂຊກມຸງຄຸນການຄ້າ ແລະ ການລົງທຶນຈຳກັດຜູ້ດຽວ ສັນຍາເລກທີ LNT 03 VPK 04SF01 MAY 2024 ແລະ ສັນຍາເລກທີ LNT 03 VPK 04SF02 MAY ໄດ້ຈັດຂຶ້ນໃນວັນທີ 21 ພຶດສະພາຜ່ານມາ ທີ່ຫ້ອງວ່າການເມືອງ ເຂົ້າຮ່ວມເປັນປະທານຂອງທ່ານ ບຸນຊົງ ວາໄຊຍີ ເຈົ້າເມືອງວຽງພູຄາ, ມີທ່ານ ພູມອນ ຄູນສີລິເຮືອງ ຮອງເຈົ້າເມືອງ ຜູ້ຊີ້ນຳຂົງເຂດເສດຖະກິດ, ຫົວໜ້າ-ຮອງຫ້ອງການ ຍທຂ ເມືອງ ພ້ອມດ້ວຍຜູ້ຕາງໜ້າບໍລິສັດເຂົ້າຮ່ວມ.

ທ່ານ ສົມລິດ ຄູນມະນີວົງ ຫົວໜ້າຫ້ອງການ ຍທຂ ເມືອງ ໄດ້ຂຶ້ນຜ່ານຮ່າງໃບສັນຍາໂຄງການສ້ອມແປງເສັ້ນທາງເລກທີ 1505 ໄລຍະທີ 1 ແລະ ໄລຍະທີ 2 ມີຄວາມຍາວ 18.344 ກິໂລແມັດ, ໜ້າທາງກວ້າງ 5 ແມັດ, ປູດ້ວຍດິນດີ ແລະ ອັດແໜ້ນ ລວມມູນຄ່າທັງໝົດທັງ 2 ໄລຍະ 9.363.970.000 ກີບ ໂດຍນຳໃຊ້ງົບປະມານຂອງລັດ ຮັບເໝົາກໍ່ສ້າງໂດຍບໍລິສັດ ໂຊກມຸງຄຸນການຄ້າ ແລະ ການລົງທຶນຈຳກັດຜູ້ດຽວ. ໃນພິທີໄດ້ມີການເຊັນສັນຍາລະຫວ່າງຫ້ອງການ ຍທຂ ເມືອງກັບບໍລິສັດ ໂຊກມຸງຄຸນການຄ້າ ແລະ ການລົງທຶນຈຳກັດຜູ້ດຽວ ໂດຍຊ້ອງໜ້າແຂກຖືກເຊີນເຂົ້າຮ່ວມເປັນສັກຂີພິຍານ. (ຂ່າວ: ຄຳປິງ)

---

### ສນຊ ...

ໃນຂອບເຂດວຽກງານຊຸກຍູ້, ສົ່ງເສີມການສ້າງຕັ້ງກອງທຶນ,ການສ້າງສູນຕົວແບບກະສິກຳ, ການສະໜອງແນວພັນພືດ, ແນວພັນສັດ, ອຸປະກອນການຜະລິດ, ການປູກ-ການລ້ຽງ, ການເກັບຊື້, ຈັດຫາຕະຫຼາດຈຳໜ່າຍ ແລະ ອື່ນໆ ທີ່ ສນຊ ແລະ ກຸ່ມບໍລິສັດພົງສະຫວັນ ຈຳກັດ ໄດ້ລົງນາມໃນປີ 2017 ແລະ ສືບຕໍ່ປະຕິບັດມາຈົນເຖິງປັດຈຸບັນ ໄດ້ 25 ກອງທຶນ ໃຫ້ມີໝາກຜົນຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຂະບວນການສ້າງຄອບຄົວ ແລະ ບ້ານສາມັກຄີປອງດອງ, ລຶບລ້າງຄວາມຫຍຸ້ງຍາກໃຫ້ປະຊາຊົນບັນດາເຜົ່າຕາມແນວທາງນະໂຍບາຍຂອງພັກ-ລັດ.

(ຂ່າວ-ພາບ: ຍຸພິນທອງ)

### ລັດຖະບານ ...

ການຮ່ວມມືລະຫວ່າງ ສປປ ລາວ ແລະ ລີບັງ ໃນໂອກາດທີ່ໄດ້ເດີນທາງມາເຄື່ອນໄຫວ ແລະ ຢ້ຽມຢາມ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານຮອງນາຍົກລັດຖະມົນຕີ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ ຂອງທ່ານ ຊັກ ຢູເຊັບ ໂຮກາແຢມ ທີ່ມີຄວາມເອົາໃຈໃສ່ບຸກບືນ, ເສຍສະຫຼະ ໃນການປະຕິບັດໜ້າທີ່ ເປັນກົງສູນກິດຕິມະສັກແຫ່ງ ສປປ ລາວ ໃນເວລາ 15 ປີ ຜ່ານມາ ໂດຍບໍ່ຫວັງຜົນຕອບແທນໃດໆ ຊຶ່ງໄດ້ອຸທິດເຫື່ອແຮງຂອງຕົນປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານກົງສູນ, ການປະກອບສ່ວນຂົນຂວາຍດຶງດູດນັກລົງທຶນ ແລະ ໂຄສະນາໃຫ້ນັກທ່ອງທ່ຽວ ຈາກປະເທດລີບັງ ເຂົ້າມາທ່ອງທ່ຽວ ແລະ ລົງທຶນຢູ່ ສປປ ລາວ. ນອກນັ້ນ, ຍັງໄດ້ໃຫ້ການຊ່ວຍເຫຼືອປະກອບສ່ວນທຶນຮອນ ແລະ ອຳນວຍຄວາມສະດວກໃຫ້ຄະນະຜູ້ແທນລາວ ທີ່ໄປປະຕິບັດພາລະກິດ ຢູ່ ປະເທດລີບັງ.

ໃນຂະນະດຽວກັນ, ທ່ານກົງສູນກິດຕິມະສັກ ໄດ້ສະແດງຄວາມພາກພູມໃຈ ແລະ ຂອບໃຈຢ່າງສູງມາຍັງທ່ານຮອງນາຍົກລັດຖະມົນຕີ ທີ່ໄດ້ຕາງໜ້າລັດຖະບານ ສປປ ລາວ ປະດັບຫຼຽນໄຊມິດຕະພາບ ອັນຊົງກຽດນີ້. ພ້ອມດຽວກັນ, ທ່ານກົງສູນກິດຕິມະສັກ ຢືນຢັນທີ່ຈະສືບຕໍ່ເອົາໃຈໃສ່ ເຮັດໜ້າທີ່ເປັນກົງສູນກິດຕິມະສັກ ເພື່ອເສີມຂະຫຍາຍການພົວພັນຮ່ວມມືທາງດ້ານເສດຖະກິດ, ການທ່ອງທ່ຽວ ແລະ ວັດທະນະທຳ ເພື່ອຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບຂອງສອງປະເທດ ລະຫວ່າງ ສປປ ລາວ ແລະ ລີບັງ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງຂຶ້ນ.

(ຂ່າວ: ກຕທ)

### ກອງປະຊຸມ ...

ໃນວັນທີ 22 ພຶດສະພາຜ່ານມາ, ທີ່ທະນາຄານ ແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສົນທະນາໃນຫົວຂໍ້ "ເງິນເຟີ້, ສະພາບ ແລະ ມາດຕະການແກ້ໄຂ" ພາຍໃຕ້ການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ມີຮອງຜູ້ວ່າການ ແລະ ບັນດາທ່ານຈາກກະຊວງ, ທະນາຄານທຸລະກິດ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ກ່າວວ່າ: ເງິນເຟີ້ເປັນບັນຫາທີ່ສົ່ງຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມທົ່ວໂລກ ໃນໄລຍະຫຼາຍປີຜ່ານມາ ຊຶ່ງພວກເຮົາໄດ້ເຫັນອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນແບບກ້າວກະໂດດ ໃນຫຼາຍປະເທດ ເຮັດໃຫ້ບັນດາປະເທດທີ່ພັດທະນາແລ້ວ ດຳເນີນນະໂຍບາຍເງິນຕາແບບຮັດກຸມ ໂດຍກຳນົດອັດຕາດອກເບ້ຍນະໂຍບາຍໃນລະດັບສູງ ແລະ ຮັກສາໄວ້ດົນນານ. ສະເພາະຢູ່ ສປປ ລາວ, ໃນ 2-3 ປີຜ່ານມາ ອັດຕາເງິນເຟີ້ໄດ້ເພີ່ມຂຶ້ນສູງສຸດໃນລະດັບ 41,26% (ເດືອນກຸມພາ 2023), ເຖິງແມ່ນວ່າຈະມີທ່າອ່ຽງຫຼຸດລົງ ແຕ່ກໍຍັງຢູ່ໃນລະດັບສອງໂຕເລກຄື 24,92% ໃນເດືອນເມສາ 2024. ສະພາບດັ່ງກ່າວຄາດວ່າຈະແກ່ຍາວໄປຕື່ມຈົນຮອດທ້າຍປີ 2024 ຊຶ່ງຈະເຮັດໃຫ້ເຮົາບໍ່ສາມາດບັນລຸເປົ້າໝາຍອັດຕາເງິນເຟີ້ໃນລະດັບໜຶ່ງໂຕເລກໄດ້. ທຫລ ໄດ້ເຮັດວຽກຮ່ວມກັບຄະນະປະເມີນສະພາບເສດຖະກິດຂອງຄະນະ Article IV ຂອງກອງທຶນສາກົນໃນອາທິດທີ່ຜ່ານມາ ລວມທັງອົງການຈັດຕັ້ງສາກົນອື່ນຄາດຄະເນກໍໄດ້ຍົກໃຫ້ເຫັນໄປໃນທິດທາງດຽວກັນ.

ສະນັ້ນ, ທະນາຄານແຫ່ງ ສປປ ລາວ ໃນນາມເປັນເສນາທິການໃຫ້ລັດຖະບານ ໃນການຮັກສາສະຖຽນລະພາບດ້ານເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ ກໍຄືການຮັກສາ ແລະ ຄຸ້ມຄອງອັດຕາເງິນເຟີ້ ບໍ່ໃຫ້ກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ຈຶ່ງມີຈຸດປະສົງຈັດກອງປະຊຸມສົນທະນາ ໃນຫົວຂໍ້ "ເງິນເຟີ້: ສະພາບ ແລະ ມາດຕະການແກ້ໄຂ" (ໃນຮູບແບບ Panel Discussion) ເພື່ອເປີດເວທີສົນທະນາປຶກສາຫາລື ແລກປ່ຽນຄຳຄິດເຫັນຕໍ່ກັບສາເຫດ ແລະ ມາດຕະການແກ້ໄຂຈາກທັງພາກລັດ, ນັກຄົ້ນຄວ້າ, ອົງການຈັດຕັ້ງສາກົນ ແລະ ບັນດາທ່ານຜູ້ເຂົ້າຮ່ວມຈາກອົງກອນຕ່າງໆ ໂດຍສະເພາະອົງກອນທີ່ເຮັດໜ້າທີ່ເປັນສື່ສານມວນຊົນ.

ດັ່ງນັ້ນ ຈຶ່ງຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງພ້ອມກັນ ແລກປ່ຽນ ແລະ ປະກອບຄຳຄິດເຫັນຊຶ່ງກັນ ແລະ ກັນຢ່າງກົງໄປກົງມາ ເພື່ອເຮັດໃຫ້ແຕ່ລະບັນຫາທີ່ຍົກຂຶ້ນມາປຶກສາຫາລືກັນນັ້ນ ມີວິທີທາງອອກທີ່ເໝາະສົມ ແລະ ສາມາດນຳເອົາໄປຈັດຕັ້ງປະຕິບັດໃຫ້ເກີດໝາກຜົນຕົວຈິງ ໂດຍສະເພາະແມ່ນສ້າງຄວາມເຂົ້າໃຈຢ່າງຖືກຕ້ອງໃຫ້ແກ່ສັງຄົມ, ມາດຕະການຂອງພາກລັດທີ່ອອກມາແກ້ໄຂ ແລະ ທິດທາງໃນຕໍ່ໜ້າ ເພື່ອຮ່ວມແຮງຮ່ວມໃຈກັນແກ້ໄຂບັນຫານຳກັນຢ່າງພ້ອມພຽງ. (ຂ່າວ: ຕຸໄລເພັດ)

### ລາວ -ກຸ້ຍໂຈວ ...

ການອຳນວຍຄວາມສະດວກດ້ານການຂົນສົ່ງສິນຄ້າ, ການທ່ອງທ່ຽວ ແລະ ອື່ນໆ.

ທ່ານ ສັງຄົມ ຈັນສຸກ ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ການພົບປະກັບ ທ່ານ ຫຼີ ປິງຈິນ ເຈົ້າແຂວງກຸ້ຍໂຈວ ສປ ຈີນ ພ້ອມດ້ວຍຄະນະ ໃນຄັ້ງນີ້, ສອງຝ່າຍໄດ້ປຶກສາຫາລື ແລະ ແລກປ່ຽນກັນຫຼາຍດ້ານເຊັ່ນ: ດ້ານການຂົນສົ່ງໂລຈິສຕິກ ໂດຍມີເສັ້ນທາງລົດໄຟລາວ-ຈີນ ຈາກນະຄອນຫຼວງວຽງຈັນຫາ ແຂວງກຸ້ຍໂຈວ ທີ່ເປີດນຳໃຊ້ແລ້ວເປັນໂຕຂັບເຄື່ອນທີ່ສຳຄັນໃນການຮ່ວມມືດ້ານທຸລະກິດຂອງສອງຝ່າຍ, ທັງການຂົນສົ່ງສິນຄ້າ ຈາກລາວໄປແຂວງກຸ້ຍໂຈວ ແລະ ຈາກແຂວງກຸ້ຍໂຈວ ມາລາວ, ລວມເຖິງການຂົນສົ່ງຜູ້ໂດຍສານ ກໍຄືນັກທ່ອງທ່ຽວ ເນື່ອງຈາກແຂວງກຸ້ຍໂຈວສາມາດເຊື່ອມໂຍງດ້ານໂລຈິສຕິກໄດ້ຫຼາຍກວ່າ 80 ປະເທດທົ່ວໂລກ.

ຜ່ານການພົບປະກັນຄັ້ງນີ້ ເຮັດໃຫ້ນັກທຸລະກິດຂອງລາວ ແລະ ແຂວງກຸ້ຍໂຈວ ຈະເປັນຜົນດີ ໃນການຮ່ວມມືກັນເພື່ອດຳເນີນທຸລະກິດໃນຕໍ່ໜ້າ, ໃນນີ້ ນັກທຸລະກິດລາວໄດ້ສະເໜີຫຼາຍບັນຫາຕໍ່ແຂວງກຸ້ຍໂຈວ ເພື່ອເຮັດໃຫ້ການສົ່ງອອກສິນຄ້າກະສິກຳຈາກລາວໄປແຂວງດັ່ງກ່າວສະດວກສະບາຍຫຼາຍຂຶ້ນ. ນອກຈາກນີ້, ຈະປະກອບສ່ວນເຮັດໃຫ້ນັກທ່ອງທ່ຽວຈາກແຂວງດັ່ງກ່າວເດີນທາງມາທ່ຽວລາວຫຼາຍຂຶ້ນ ໂດຍມີລົດໄຟລາວ-ຈີນ ເປັນຕົວຂັບເຄື່ອນທີ່ສຳຄັນ ເພາະເຮັດໃຫ້ການເດີນທາງມີຄວາມສະດວກສະບາຍ.

ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃຫ້ຮູ້ຕື່ມວ່າ: ສຳລັບສິນຄ້າກະສິກຳທີ່ລາວສະເໜີສົ່ງອອກໄປແຂວງກຸ້ຍໂຈວ ລວມມີ ແປ້ງມັນຕົ້ນ, ຖົ່ວລຽນ ແລະ ອື່ນໆ. ສ່ວນສິນຄ້າທີ່ແຂວງກຸ້ຍໂຈວ ຈະສົ່ງມາລາວ ລວມມີ ເຫຼົ້າເໝົາຖາຍ, ສ່ວນປະກອບສຳລັບຜະລິດປຸ໋ຍ ແລະ ອື່ນໆ.

ໃນກອງປະຊຸມຮ່ວມມືດ້ານເສດຖະກິດ, ການຄ້າ, ວັດທະນະທຳ ແລະ ທ່ອງທ່ຽວ ລະຫວ່າງ ສປປ ລາວ ແລະ ແຂວງກຸ້ຍໂຈວ ສປ ຈີນ ໃນຄັ້ງນີ້ ໄດ້ມີຫົວໜ່ວຍທຸລະກິດຈາກສອງຝ່າຍຫຼາຍຫົວໜ່ວຍ ເຊັນສັນຍາໂຄງການຮ່ວມມືກັນເຊັ່ນ: ຄະນະຄຸ້ມຄອງເຂດປອດພາສີກວມລວມກຸ້ຍຢາງ, ຄະນະຄຸ້ມຄອງເຂດປອດພາສີກວມລວມຈຸນຢີ້ ແລະ ຄະນະຄຸ້ມຄອງເຂດປອດພາສີກວມລວມກຸ້ຍອານ ເຊັນສັນຍາກັບບໍລິສັດທາງລົດໄຟລາວ-ຈີນ ຈຳກັດ ກ່ຽວກັບຂອບການຮ່ວມມືຍຸດທະສາດ, ບໍລິສັດ ໂຮງງານຜະລິດເຫຼົ້າເໝົາຖາຍ ກຸ້ຍໂຈວ ເຊັນສັນຍາຮ່ວມມືກັບບໍລິສັດທາງລົດໄຟລາວ-ຈີນ ຈຳກັດ ແລະ ອື່ນໆ.

(ຂ່າວ: ບຸນຕຽງ)

### ພ້ອມກັນກຳຈັດ ...

ໜອນນ້ຳຍຸງລາຍ ຖ້າບໍ່ມີໜອນນ້ຳບໍ່ມີຍຸງລາຍບໍ່ມີໄຂ້ຍຸງລາຍ. ວິທີປ້ອງກັນທີ່ດີທີ່ສຸດສຳລັບການກຳຈັດແຫຼ່ງເພາະພັນຍຸງລາຍ ແມ່ນກຳຈັດບ່ອນວາງໄຂ່ຂອງຍຸງລາຍເປັນຕົ້ນ ແຫຼ່ງທີ່ຢູ່ອາໄສຂອງຍຸງລາຍ ທີ່ເຮົາຕ້ອງຈຳກັດມີຄື: ຖ້າຢູ່ໃນເຮືອນຕ້ອງກຳຈັດບ່ອນເພາະພັນຍຸງລາຍຕາມບໍລິເວນຖ້ວຍຮອງຕີນຕູ້, ໂຖດອກໄມ້ ແລະ ຈານຮອງ, ຖັງເກັບນ້ຳໃສ່, ນ້ຳກິນ ຫຼື ຖັງໃນຫ້ອງນ້ຳ, ພາຊະນະທີ່ເປັນຢາງພລາສຕິກ, ກະປ໋ອງ ແລະ ອື່ນໆ. ຖ້າຢູ່ນອກເຮືອນ ຕ້ອງເກັບມ້ຽນ ຫຼື ຖິ້ມກະປ໋ອງທີ່ບໍ່ໄດ້ໃຊ້, ຢາງຕົນລົດເກົ່າ, ພາຊະນະທີ່ບັນຈຸນ້ຳ, ຕົ້ນໄມ້ທີ່ເປັນຮູ ຫຼື ໂກນ, ຂຸມ, ສະຖານທີ່ກໍ່ສ້າງ, ຝຸ່ຍເກັບນ້ຳຝົນ, ເປືອກຫອຍ, ເປືອກໄມ້, ໃບໄມ້ທີ່ສາມາດເປັນບ່ອນເກັບນ້ຳ, ເຮືອ ແລະ ອຸປະກອນອື່ນໆ, ພາຊະນະທີ່ບັນຈຸນ້ຳຝົນ ຫຼື ໃຊ້ສຳລັບເກັບນ້ຳຄວນຈະປົກປິດ ຫຼື ຖິ້ມໃຫ້ຖືກຕ້ອງ. ສ່ວນພາຊະນະອື່ນໆບໍ່ຄວນໃຫ້ມີນ້ຳຂັງ ຕ້ອງອະນາໄມ ແລະ ຮຸກຖູ ເພື່ອກຳຈັດໄຂ່ຍຸງ ຢ່າງໜ້ອຍອາທິດລະຄັ້ງ. ໃນຄວາມເປັນຈິງການມີສ່ວນຮ່ວມຂອງຊຸມຊົນແມ່ນເປັນມາດຕະການປ້ອງກັນທີ່ສຳຄັນ ທຸກໆຄອບຄົວມີເປົ້າໝາຍໃນການຫຼຸດຄວາມໜາແໜ້ນຂອງຍຸງລາຍ ກໍຈະສາມາດຫຼຸດອັດຕາການຕິດເຊື້ອ ຫຼື ຢຸດການສົ່ງເຊື້ອພະຍາດດັ່ງກ່າວໄດ້. ພ້ອມນັ້ນ, ເພື່ອປ້ອງກັນພະຍາດໄຂ້ຍຸງລາຍ ທີ່ສັງຄົມຍັງເຮັດໄດ້ຄືການປະຕິບັດຫຼັກການ 5 ປ ທີ່ກະຊວງສາທາລະນະສຸກວາງອອກຄື: ປິດຝາພາຊະນະທີ່ເກັບນ້ຳໃນເຮືອນ ແລະ ນອກເຮືອນ ເພື່ອບໍ່ໃຫ້ຍຸງມາວາງໄຂ່ໃສ່; ປ່ຽນນ້ຳແລະ ຜັດຖູພາຊະນະເຊັ່ນ: ເຕົ້າດອກໄມ້, ນ້ຳຮອງຕີນຕູ້, ຖ້ານຮອງ ຈາກ ນ້ຳ ແລະ ອື່ນໆ; ປ່ອຍປາຫາງນົກຍຸງ ເພື່ອກິນໜອນນ້ຳ; ປັບປຸງ ບໍ່ໃຫ້ມີນ້ຳຄ້າງຂັງກະໂປະ, ກະປ໋ອງ, ຮາງລິນ, ຢາງຕົນລົດເກົ່າ ແລະ ຝາຕຸກນ້ຳ; ປະຕິບັດ ເປັນປະຈຳທຸກໆອາທິດ ແລະ ຖ້າເປັນໄຂ້ໃຫ້ໄປປິ່ນປົວຢູ່ໂຮງໝໍ ຫຼື ໂຮງໝໍໃກ້ບ້ານທ່ານ.

( ໂດຍ: ວັນເພັງ)

### ນອ ...

ໂຮງຮຽນມັດທະຍົມສຶກສາທັງໝົດ 197 ແຫ່ງ, ໃນນັ້ນມີໂຮງຮຽນເອກະຊົນ 90 ແຫ່ງ, ໂຮງຮຽນລັດ 106 ແຫ່ງ, ໂຮງຮຽນທີ່ມີຊັ້ນ ມ.4 ມີ 175 ແຫ່ງ, ເພີ່ມຂຶ້ນ 4 ແຫ່ງ, ມີນັກຮຽນ ມ.4 ທັງໝົດ 12.391 ຄົນ, ຍິງ 6.294 ຄົນ ແລະ ໂຮງຮຽນທີ່ມີຊັ້ນ ມ.7 ມີ 114 ແຫ່ງ, ເພີ່ມຂຶ້ນ 6 ແຫ່ງ, ມີນັກຮຽນ ມ.7 ທັງໝົດ 9.427 ຄົນ, ຍິງ 4.863 ຄົນ.

ທ່ານ ສົມພອນ ສອນດາລາ ກ່າວໃຫ້ຮູ້ອີກວ່າ: ສຳລັບການສອບເສັງເລື່ອນຊັ້ນປະຖົມສຶກສາຂັ້ນປ1-ປ4ສອບເສັງໃນວັນທີ 13-17 ພຶດສະພາ, ຂັ້ນ ປ5 ສອບເສັງໃນວັນທີ 28-29 ພຶດສະພາ, ສອບເສັງໃນ 4 ວິຊາຄື: ວິຊາພາສາລາວ, ຄະນິດສາດ, ວິທະຍາສາດ ແລະ ສິ່ງແວດລ້ອມ, ຈັດເປັນ 59 ສູນສອບເສັງ ຈຳນວນນັກສອບເສັງທັງໝົດ 15.869 ຄົນ, ຍິງ 7.807 ຄົນ, ຫ້ອງສອບເສັງ 618 ຫ້ອງ, ສະເລ່ຍຈຳນວນນັກສອບເສັງຫ້ອງລະ 25-30 ຄົນ, ແຕ່ລະຫ້ອງນັ່ງໂຕະລະ 1 ຄົນ, ມີກຳມະການຍາມຫ້ອງທັງໝົດ 1.245 ຄົນ ຊຶ່ງໄດ້ຈັດຢູ່ແຕ່ລະເມືອງ; ຊັ້ນ ມ1-ມ3 ແລະ ມ5-ມ6 ຈະສອບເສັງໃນວັນທີ 20-24 ພຶດສະພາ; ຊັ້ນ ມ4 ຈະສອບເສັງຈົບຊັ້ນໃນລະຫວ່າງວັນທີ 11-13/6/2024 ສອບເສັງໃນ 5 ວິຊາຄື: ຄະນິດສາດ, ພາສາລາວ-ວັນນະຄະດີ, ວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ ແລະ ພາສາອັງກິດ, ຈັດເປັນ 32 ສູນສອບເສັງ ຈຳນວນນັກສອບເສັງທັງໝົດ 12.391 ຄົນ, ຍິງ 6.294 ຄົນ, ຫ້ອງສອບເສັງ 582 ຫ້ອງ, ສະເລ່ຍຈຳນວນນັກສອບເສັງຫ້ອງລະ 20-25 ຄົນ, ແຕ່ລະຫ້ອງນັ່ງໂຕະລະ 1 ຄົນ, ກຳມະການຍາມຫ້ອງທັງໝົດ 1.406 ຄົນ ຊຶ່ງໄດ້ຈັດຢູ່ແຕ່ລະເມືອງ ແລະ ຊັ້ນ ມ.7 ຈະສອບເສັງໃນລະຫວ່າງວັນທີ 19-21/6/2024 ສອບເສັງໃນ 5 ວິຊາຄື: ຄະນິດສາດ, ພາສາລາວ-ວັນນະຄະດີ, ກຸ່ມວິທະຍາສາດທຳມະຊາດ (ຟີຊິກສາດ, ເຄມີສາດ, ຊີວະສາດ), ກຸ່ມວິທະຍາສາດສັງຄົມ (ພູມສາດ, ປະຫວັດສາດ, ສຶກສາພົນລະເມືອງ) ແລະ ພາສາອັງກິດ, ຈັດເປັນ 22 ສູນສອບເສັງ ຈຳນວນນັກສອບເສັງທັງໝົດ 9.427 ຄົນ, ຍິງ 4.863 ຄົນ, ຫ້ອງສອບເສັງ 455 ຫ້ອງ, ສະເລ່ຍຫ້ອງລະ 22-23 ຄົນ, ແຕ່ລະຫ້ອງນັ່ງໂຕະລະ 1 ຄົນ, ກຳມະການຍາມຫ້ອງທັງໝົດ 1.231 ຄົນ ຊຶ່ງໄດ້ຈັດຢູ່ແຕ່ລະເມືອງ. (ຂ່າວ-ພາບ: ພູວັນ)

### ກົມມໍຣະດົກ ...

ຄວາມສວຍງາມ ແລະ ເກົ່າແກ່ ຊຶ່ງສິ່ງທີ່ຢັ້ງຢືນໄດ້ວ່າພະທີ່ຄົ້ນພົບ ເປັນພະເກົ່າແກ່ແທ້ນັ້ນ ພວກເຮົາໄດ້ຄົ້ນພົບພະພຸດທະຮູບບາງອົງທີ່ມີສີລາຈາລຶກຢູ່ໃນແທ່ນຂອງເພິ່ນ, ໄດ້ບອກອາຍຸການສັກແນ່ຢູ່ໃນຕົ້ນສະຕະວັດທີ 16 ຊຶ່ງມີອາຍຸເຖິງ 500 ກວ່າປີ ແລະ ຍັງມີພະພຸດທະຮູບທີ່ອາດຈະມີອາຍຸໜ້ອຍກວ່າ 500 ປີ ຫຼື ຫຼາຍກວ່າ 500 ປີກໍມີ. ພ້ອມນີ້, ຍັງມີຮ່ອງຮອຍຂອງເສົາວິຫານ, ຮ່ອງຮອຍຂອງພະທາດ ແລະ ຮ່ອງຮອຍທາງດ້ານບູຮານຄະດີ ໄດ້ຊີ້ບອກຢ່າງຈະແຈ້ງ ແລະ ໃນປະຫວັດສາດກໍໄດ້ບັນທຶກໄວ້ວ່າ ດອນເຜີ້ງຄຳແຫ່ງນີ້ເປັນທີ່ຕັ້ງຂອງວັດ ເຖິງ 9 ວັດ ຊຶ່ງຈຸດທີ່ຄົ້ນພົບດັ່ງກ່າວ ເປັນ 1 ໃນ 9 ວັດເກົ່າແກ່ໃນອະດີດ.

ການຂຸດຄົ້ນພະພຸດທະຮູບຢູ່ດອນເຜີ້ງຄຳ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວໃນໄລຍະທີ 1 ແລະ ໄລຍະທີ 2 ມາຮອດວັນທີ 20 ພຶດສະພາຜ່ານມາ ສາມາດຂຸດຄົ້ນພະພຸດທະຮູບໄດ້ທັງໝົດ 282 ອົງ ພາຍຫຼັງເລີ່ມລົງມືຂຸດຄົ້ນມາແຕ່ ວັນທີ 16 ມີນາ 2024 ຊຶ່ງພະທີ່ຄົ້ນພົບສ່ວນຫຼາຍແມ່ນພະພຸດທະຮູບທອງສຳລິດປາງຊະນະມານ. ໃນນັ້ນ, ມີພະພຸດທະຮູບອົງທີ່ສົມບູນເປັນຈຳນວນຫຼາຍ ແລະ ອົງທີ່ບໍ່ສົມບູນຈຳນວນໜຶ່ງ.

ຢ່າງໃດກໍຕາມພະພຸດທະຮູບທີ່ຄົ້ນພົບທັງໝົດໄລຍະ 1 ແລະ ໄລຍະ 2 ຈະໄດ້ອັນເຊີນໄປປະດິດສະຖານ ໄວ້ຢູ່ວັດທອງທິບພັດທະນາຣາມ ຫຼື ວັດບ້ານໃຫຍ່ຕົ້ນເຜີ້ງ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ ແລະ ໃນເວລາ 17:00 ໂມງ ຂອງວັນທີ 22 ພຶດສະພາ 2024 ນີ້, ຈະມີພິທີອັນເຊີນພະເຈົ້າໃຫຍ່ປາງຊະນະມານທອງສຳລິດ ຫຼືພະປະທານທີ່ຄົ້ນພົບ ໃນວັນທີ 16 ພຶດສະພາຜ່ານມາ ແລະ ພະພຸດທະຮູບອົງອື່ນໆທີ່ຄົ້ນພົບຈາກຈຸດພັກໄວ້ຢູ່ແຄມນ້ຳຂອງດອນເຜີ້ງຄຳໄປປະດິດສະຖານໄວ້ຢູ່ວັດທອງທິບພັດທະນາຣາມ.

(ຂ່າວ: ທະນູທອງ)

**ພົວພັນນັກຂ່າວ ໂທ: 021 336118 021 336119**




## ເປົ້າໝາຍສູ້ຊົນ ການສ້າງເສດຖະກິດ ເອກະລາດ

ໃນມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່, ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ໄດ້ວາງເປົ້າໝາຍສູ້ຊົນໄວ້ວ່າ ແຕ່ນີ້ຮອດປີ 2026 ຕ້ອງສຸມທຸກກຳລັງແຮງສັງລວມ ເພື່ອຈັດຕັ້ງປະຕິບັດ ມະຕິກອງ ປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄລຍະທ້າຍສະໄໝ ໃຫ້ປະກົດຜົນເປັນຈິງດ້ວຍຄຸນນະພາບ ແລະ ປະສິດທິຜົນຕົວຈິງ ຕາມຈິດໃຈສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ, ພ້ອມທັງສ້າງທ່າໃໝ່ ໃຫ້ການຈັດຕັ້ງປະຕິບັດ ທິດທາງ, ຄາດໝາຍໃຫຍ່ຮອດປີ 2030 ທີ່ຈະຖືກກຳນົດອອກໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ກໍຄືການບັນລຸຄາດໝາຍໃຫຍ່ ໃນວິໄສທັດ ຮອດປີ 2030.

ສືບຕໍ່ຮັບປະກັນ ໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມສະຫງົບປອດໄພທາງສັງຄົມ ຢ່າງໜັກແໜ້ນ; ການຂະຫຍາຍຕົວ ຂອງເສດຖະກິດມີຄວາມໝັ້ນທ່ຽງ, ໜັກແໜ້ນ ແລະ ມີຄວາມຍືນຍົງ, ເປັນປະເທດລາຍຮັບປານກາງສູງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງໂດຍພື້ນຖານ; ເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມໄດ້ຮັບການພັດທະນາ ຢ່າງເປັນລະບົບ; ບັນດາພາກສ່ວນເສດຖະກິດ ທີ່ເປັນກຳລັງແຮງໃຫ້ພື້ນຖານເສດຖະກິດແຫ່ງຊາດ ມີຄວາມໜັກແໜ້ນ, ມີລະບົບ ໂຄງລ່າງ ພື້ນຖານເສດຖະກິດ ທີ່ເຂັ້ມແຂງ, ສ້າງໂຄງປະກອບເສດຖະກິດທີ່ຖືເອົາກະສິກຳ ຕິດແໜ້ນກັບອຸດສາຫະກຳ ແລະ ການບໍລິການ ແລະ ພັດທະນາໄປຕາມທິດເສດຖະກິດພູມປັນຍາ, ຫັນເປັນອຸດສາຫະກຳ ແລະ ທັນເປັນດີຈີຕອນ, ເຮັດໃຫ້ສັດສ່ວນໂຄງປະກອບດ້ານອຸດສາຫະກຳຂອງ GDP ເພີ່ມຂຶ້ນໃນແຕ່ລະປີ ດ້ວຍໂຕເລກທີ່ແນ່ນອນ.

ສູ້ຊົນຂະຫຍາຍການຈັດເກັບລາຍຮັບງົບປະມານແຫ່ງລັດ ໃຫ້ໄດ້ 20% ຂອງ GDP, ແຜນລາຍຈ່າຍ ບໍ່ເກີນການເພີ່ມຂຶ້ນ ຂອງລາຍຮັບ ຫຼື ບໍ່ເກີນ 20% ຂອງ GDP ເພື່ອເຮັດໃຫ້ລາຍຮັບພາຍໃນ ກຸ້ມລາຍຈ່າຍພາຍໃນ ແລະ ມີສ່ວນສະສົມພຽງພໍເພື່ອຊຳລະໜີ້ສິນສາທາລະນະ, ເປັນເຈົ້າຕົນເອງທາງດ້ານການເງິນ, ລະບົບການເງິນ-ເງິນຕາ ມີຄວາມທັນສະໄໝ, ມີປະສິດທິພາບ, ສະດວກຄ່ອງຕົວ ແລະ ເອື້ອອຳນວຍໃຫ້ການບໍລິການດ້ານການເງິນ, ການລົງທຶນ ແລະ ການຜະລິດທຸລະກິດ, ຕ້ອງສູ້ຊົນເຮັດໃຫ້ງົບປະມານສົມດູນ, ຫຼຸດຜ່ອນການກູ້ຢືມເງິນຈາກຕ່າງປະເທດ, ຫັນໂຄງສ້າງໜີ້ສາທາລະນະທີ່ມີດອກເບ້ຍສູງໄປສູ່ເງິນກູ້ຕົ້ນທຶນທີ່ມີດອກເບ້ຍຕ່ຳ ແລະ ຕ້ອງຮັບປະກັນຄວາມເຊື່ອໝັ້ນ ໃນການຊຳລະສະສາງໜີ້ສິນຕ່າງປະເທດ, ເຮັດໃຫ້ດັດຊະນີ ຄວາມໜ້າເຊື່ອຖືດ້ານການເງິນດີຂຶ້ນ.

ສູ້ຊົນແກ້ໄຂບັນຫາທາງດ້ານເງິນຕາ ແລະ ການຄຸ້ມຄອງເງິນຕາ ໃຫ້ເຂົ້າສູ່ລະບົບ ແລະ ມີການຫັນປ່ຽນຈະແຈ້ງ, ຮັບປະກັນສະຖຽນລະພາບດ້ານເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ ແລະ ການຖືຄອງ, ນຳໃຊ້ເງິນກີບ ໃຫ້ເພີ່ມຂຶ້ນຫຼາຍເທົ່າ. ສູ້ຊົນໃຫ້ອັດຕາເງິນເຟີ້ຫຼຸດລົງຢ່າງຕໍ່ເນື່ອງ ໃນລະດັບໜຶ່ງໂຕເລກ; ຄັງສຳຮອງເງິນຕາຕ່າງປະເທດ ເພີ່ມຫຼາຍຂຶ້ນ; ຄຸ້ມຄອງການສົ່ງອອກຜ່ານລະບົບທະນາຄານ ໃຫ້ບັນລຸ 85%, ຮັບປະກັນດຸນຊຳລະເງິນຕາຕ່າງປະເທດ ແລະ ການເຂົ້າເຖິງບໍລິການທາງດ້ານການເງິນ ຕໍ່ປະຊາກອນທັງໝົດບັນລຸ 80%.

## ປາຖະກະຖາວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ຄົບຮອບ 65 ປີ






ກະຊວງປ້ອງກັນປະເທດ (ປກຊ) ໄດ້ຈັດຕັ້ງພິທີປາຖະກະຖາມູນເຊື້ອວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ຄົບຮອບ 65 ປີ (18/5/1959-18/5/2024) ຂຶ້ນໃນວັນທີ 22 ພຶດສະພານີ້ ທີ່ກະຊວງດັ່ງກ່າວ ໂດຍໃຫ້ກຽດປາຖະກະຖາຂອງ ສະຫາຍ ພົນຈັດຕະວາ ຄຳຫອມ ແສງບົວລົມ ວິລະຊົນແຫ່ງຊາດ ຮອງປະທານສະຫະພັນນັກຮົບ ເກົ່າແຫ່ງຊາດລາວ, ໂດຍມີສະຫາຍ ພົນຈັດຕະວາ ໄພວັນ ຈັນທະພົມມາ ກຳມະການຄະນະພັກ ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ ກະຊວງ ປກຊ, ມີບັນດາຄະນະນຳກະຊວງ ປກຊ, ຄະນະກົມໃຫຍ່-ຫ້ອງວ່າການ, ບັນດາຜູ້ຕາງໜ້າອົງການ-ກົມກອງ ພ້ອມດ້ວຍພະນັກງານຫຼັກແຫຼ່ງເຂົ້າຮ່ວມຮັບຟັງ.

ສະຫາຍ ພົນຈັດຕະວາ ຄຳຫອມ ແສງບົວລົມ ໃຫ້ກຽດປາຖະກະຖາວັນດັ່ງກ່າວໂດຍໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາຂອງການຜ່າວົງປິດລ້ອມຂອງກອງພັນທີ 2 ໃນວັນທີ 18/5-2/6/1959 ໃນຄ່ຳຄືນວັນທີ 18/5/1959 ພາຍໃຕ້ການບັນຊາຂອງຄະນະກອງພັນ, ແຕ່ລະກົມກອງພ້ອມດ້ວຍຄອບຄົວພະນັກງານ, ນັກຮົບທັງໝົດໄດ້ຢຶດຖອນທັບໄປທາງທິດບ້ານໂຕນ-ນາແຖງ-ໜອງເຕົ້ ແລ້ວເຂົ້າປ່າໄປທາງທິດບ້ານມາຍ (ທິດຕາເວັນຕົກສ່ຽງໃຕ້ປະມານ 15 ກິໂລແມັດ) ຍ່າງປິດລ້ອມມາຮອດ 7 ໂມງເຊົ້າຂອງວັນທີ 19/5/1959 ສັດຕູໄດ້ບຸກເຂົ້າຢຶດອາວຸດກອງພັນທີ 2 ແຕ່ພວກເຂົາຕົກສະເງີ້ເພາະຢູ່ໃນຄ້າຍມີແຕ່ຄວາມມິດງຽບ-ວ່າງເປົ່າ ນັບທັງເຮືອນຫ້ອງແຖວ, ຄອບຄົວພະນັກງານທະຫານກໍບໍ່ມີຄົນ. ພ້ອມນີ້, ໄດ້ຍົກໃຫ້ເຫັນຄວາມໝາຍ-ຄວາມສຳຄັນ ຊຶ່ງການຜ່າວົງປິດລ້ອມຂອງກອງພັນທີ 2 ແມ່ນໄຊຊະນະອັນໃຫຍ່ຫຼວງຂອງກຳລັງປະກອບອາວຸດເຮົາທີ່ຢູ່ໃຕ້ການນຳພາຂອງພັກ, ເປັນເຫດການປະຫວັດສາດອັນສຳຄັນຂອງຊາດ, ຂອງພັກ, ຂອງກອງທັບເຮົາ ແລະ ເປັນບົດຮຽນອັນລ້ຳຄ່າທີ່ສຸດໃຫ້ຂະບວນຕໍ່ສູ້ຂອງກອງທັບ ແລະ ປະຊາຊົນເຮົາຍາດເອົາໄຊຊະນະໃນໄລຍະຕໍ່ມາທັງສະແດງໃຫ້ເຫັນເຖິງຄວາມບໍລິສຸດຜຸດຜ່ອງ, ຄວາມຈົງຮັກພັກດີ, ຄວາມສາມັກຄີເປັນຈິດໜຶ່ງໃຈດຽວ, ຄວາມອົດທົນໝັ້ນໝຽວບໍ່ຄອນແຄນຕໍ່ການນາບຂູ່, ຫຼອກລວງຂອງສັດຕູ, ນ້ຳໃຈສູ້ຮົບພິລະອາດຫານ ແລະ ມີໄຫວພິບຂອງກອງພັນທີ 2 ໄດ້ເປັນແວ່ນແຍງ, ເປັນການປຸກລະດົມອັນແຮງກ້າໃຫ້ຂະບວນການປະຕິວັດເພື່ອຕີເອົາຊະນະກັບຈັກກະພັດອາເມຣິກາ ແລະ ລູກແຫຼ່ງຕົນມື. ພ້ອມກັນນັ້ນ, ກໍເຮັດໃຫ້ກຳລັງປະຕິວັດ ໂດຍສະເພາະແມ່ນກຳລັງປະກອບອາວຸດປະຊາຊົນນັບມື້ເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງ. ພ້ອມນັ້ນ, ຍັງຍົກໃຫ້ເຫັນປັດໄຈພື້ນຖານທີ່ເຮັດໃຫ້ກອງພັນທີ 2 ສາມາດຜ່າວົງປິດລ້ອມຢ່າງມີໄຊ.

ການຈັດພິທີປາຖະກະຖາໃນຄັ້ງນີ້ຂຶ້ນເພື່ອເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້, ເຊື່ອມຊຶມບັນດາເຫດການ, ການເຄື່ອນໃນແຕ່ລະໄລຍະບົນເສັ້ນທາງປະຕິວັດອັນລະອິດລະອຽວ, ນ້ຳໃຈເສຍສະຫຼະເພື່ອການປະຕິວັດ ພ້ອມກັນສືບຕໍ່ຮັກສາທາດແທ້ມູນເຊື້ອອັນສະຫງ່າງາມ ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ.

(ຂ່າວ-ພາບ: ວັນເພັງ)

## ກອງປະຊຸມໂຄສະນາປຸກລະດົມ ເສຍພັນທະພາສີ - ອາກອນໃຫ້ລັດ

ສູນກາງແນວລາວສ້າງຊາດ ຮ່ວມກັບແນວລາວສ້າງຊາດແຂວງສາລະວັນ, ພະແນກການເງິນແຂວງໄດ້ຈັດກອງປະຊຸມ ໂຄສະນາປຸກລະດົມການປະຕິບັດພັນທະເສຍພາສີ-ອາກອນໃຫ້ລັດ ໃນວັນທີ 20 ພຶດສະພາຜ່ານມາ ທີ່ຫ້ອງວ່າການແຂວງ ໂດຍການເປັນປະທານຮ່ວມຂອງທ່ານນາງ ສີພະຈັນ ບັນທະວົງສາ ຮອງປະທານສູນກາງແນວລາວສ້າງຊາດ (ສນຊ), ທ່ານ ຄຳຕາ ໂຮ່ຊົງເລືອງ ປະທານແນວລາວສ້າງຊາດແຂວງ, ທ່ານ ພອນປະເສີດ ລາຊາໂພ ຫົວໜ້າພະແນກການເງິນແຂວງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານນາງສີພະຈັນບັນທະວົງສາ ໄດ້ຍົກໃຫ້ເຫັນຄວາມໝາຍ-ຄວາມສຳຄັນຂອງການປະຕິບັດພັນທະເສຍພາສີ-ອາກອນໃຫ້ລັດ ກໍຄືການປະຕິບັດ 2 ວາລະແຫ່ງຊາດໃນການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດເຂົ້າສູ່ວຽກຕົວຈິງ. ການເສຍພັນທະພາສີ-ອາກອນໃຫ້ລັດ ແມ່ນການສະແດງອອກເຖິງຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ຕ້ອງມີພັນທະປະກອບສ່ວນເສຍພາສີ-ອາກອນປະເພດຕ່າງໆຢ່າງຄົບຖ້ວນໃຫ້ລັດຕາມລະບຽບກົດໝາຍ ທັງເປັນການແກ້ໄຂບັນຫາການຮົ່ວໄຫຼຂອງລາຍຮັບ, ການລັກລອບພາສີ-ອາກອນ; ພົນລະເມືອງລາວທຸກຄົນມີພັນທະໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ພາຍຫຼັງສຳເລັດການເຜີຍແຜ່ຄັ້ງນີ້ ມອບໃຫ້ແນວລາວສ້າງຊາດແຂວງ ປະສານສົມທົບກັບພະແນກການເງິນແຂວງ, ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ລົງເຜີຍແຜ່ໃຫ້ບັນດາເມືອງ ເພື່ອ



ຜັນຂະຫຍາຍໃຫ້ປະຊາຊົນລາວບັນດາເຜົ່າ, ນັກທຸລະກິດຊາວຄ້າ-ຂາຍມີຄວາມເຂົ້າໃຈ ແລະ ເປັນເອກະພາບຕໍ່ພັນທະເສຍພາສີ-ອາກອນໃຫ້ລັດພ້ອມນີ້ຮຽກຮ້ອງໃຫ້ນັກທຸລະກິດ, ຜູ້ປະກອບການ, ຊາວຄ້າ-ຂາຍ, ກຳມະການແນວລາວສ້າງຊາດ ແຂວງ ຈົ່ງໃຫ້ຄວາມຮ່ວມມື ແລະ ຊ່ວຍເປັນກະບອກສຽງປຸກລະດົມປະຊາຊົນລາວບັນດາເຜົ່າ, ຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການຈົ່ງພ້ອມກັນຈັດຕັ້ງປະຕິບັດວຽກດັ່ງກ່າວໃຫ້ໄດ້ຮັບຜົນດີ.

ກອງປະຊຸມຍັງໄດ້ເຜີຍແຜ່ 3 ເອກະສານສຳຄັນຄື: ປະເທດລາວຄົນລາວເປັນເຈົ້າຂອງ; ຄວາມຮູ້ພື້ນຖານກ່ຽວກັບວຽກງານພາສີ ແລະ ອາກອນ ເພື່ອໂຄສະນາ, ຊຸກຍູ້, ປຸກລະດົມຂົນຂວາຍນັກທຸລະກິດ, ປະຊາຊົນລາວບັນດາເຜົ່າ, ຊາວຄ້າ-ຂາຍ ແລະ ຜູ້ປະກອບການໃຫ້ມີຄວາມຕື່ນຕົວປະຕິບັດພັນທະເສຍພາສີ ແລະ ອາກອນໃຫ້ລັດຢ່າງຄົບຖ້ວນຕາມລະບຽບກົດໝາຍວາງອອກ. ຈາກນັ້ນ, ຄະນະໄດ້ໄປຢ້ຽມຢາມພົບປະບໍລິສັດຈຸງຢາງ ຊີມັງກາຊ້າງ ແລະ ບໍລິສັດຊະນະໄຊຕື່ມອີກ.

(ຂ່າວ: ສາລະວັນ)

## ປາກແຊງ ເປີດຂະບວນການ ວສຊ ທົ່ວເມືອງ

ອົງການປົກຄອງເມືອງປາກແຊງ ແຂວງຫຼວງພະບາງ ໄດ້ຈັດພິທີເປີດຂະບວນການວັນສັກຢາກັນພະຍາດແຫ່ງຊາດ (ວສຊ) ໝາກແດງໃຫຍ່-ໝາກແດງນ້ອຍ ເມື່ອບໍ່ດົນມານີ້, ທີ່ບ້ານໜອງຟ້າແດດ ໂດຍມີທ່ານ ສົມສະນິດ ເຮືອງມະນີ ຮອງເຈົ້າເມືອງໆປາກແຊງ, ທ່ານ ທຸ່ມພັນ ຈິລະສັກ ຮອງຫົວໜ້າພະແນກສາທາລະນະສຸກແຂວງພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ສົມສະນິດ ເຮືອງມະນີ ກ່າວວ່າ: ການເປີດຂະບວນການຄັ້ງນີ້ ເພື່ອຄວບຄຸມການລະບາດຂອງພະຍາດໝາກແດງ, ເນື່ອງຈາກວ່າໄລຍະຜ່ານມາຫຼາຍເຂດໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໝາກແດງ ແລະ ອັດຕາການປົກຄຸມການໃຫ້ວັກຊິນກັນພະຍາດຍັງຕ່ຳ ເປັນສິ່ງທ້າທາຍທີ່ຈະເກີດການລະບາດພະຍາດໝາກແດງກັບຄືນມາອີກໃນອະນາຄົດ. ພ້ອມນີ້, ເພື່ອປັບປຸງຍົກລະດັບອັດຕາການສັກວັກຊິນກັນພະຍາດໝາກແດງໃນກຸ່ມເປົ້າໝາຍໃຫ້ສູງຂຶ້ນ, ຮັບປະກັນການຫຼຸດຜ່ອນອັດຕາການເຈັບເປັນ ແລະ ການເສຍຊີວິດຍ້ອນພະຍາດ ທີ່ສາມາດປ້ອງກັນໄດ້ດ້ວຍວັກຊິນກັນພະຍາດ. ຮຽກຮ້ອງໃຫ້ປະຊາຊົນບັນດາເຜົ່າໃນທົ່ວເມືອງ ພ້ອມກັນນຳເອົາລູກ-ຫຼານທີ່ມີອາຍຸ 5-59 ເດືອນມາຮັບການສັກວັກຊິນປ້ອງກັນພະຍາດໝາກແດງໃຫຍ່-ໝາກແດງນ້ອຍຢູ່ຈຸດບໍລິການທີ່ກຳນົດໄວ້ ເພື່ອເຮັດໃຫ້ຂະບວນການ ວສຊ ຄັ້ງນີ້ບັນລຸ 95% ຂຶ້ນໄປ. ໃນພິທີ, ຄະນະປະທານໄດ້ພ້ອມກັນຢອດຢາວິຕາມິນອາ ແລະ ສັກວັກຊິນປ້ອງກັນໝາກແດງໃຫຍ່-ໝາກແດງນ້ອຍໃຫ້ເດັກໃນກຸ່ມເປົ້າໝາຍຕື່ມອີກ. (ຂ່າວ: ແກ່ນຄຳ ສົມໃຈປອງ)



## ບໍ່ແຕນ ມີເດັກນ້ອຍໃນກຸ່ມເປົ້າໝາຍສັກວັກຊິນໝາກແດງໃຫຍ່-ໝາກແດງນ້ອຍ 1.059 ຄົນ

ເມືອງບໍ່ແຕນ ແຂວງໄຊຍະບູລີ ມີເດັກໃນກຸ່ມເປົ້າໝາຍສັກວັກຊິນປ້ອງກັນພະຍາດໝາກແດງໃຫຍ່-ໝາກແດງນ້ອຍທົ່ວເມືອງຈຳນວນ 1.059 ຄົນ ແລະ ຈະສືບຕໍ່ເຄື່ອນໄຫວສັກວັກຊິນຢູ່ບັນດາບ້ານໃນທົ່ວເມືອງໃຫ້ບັນລຸ 95% ຂຶ້ນໄປ.

ຫ້ອງການສາທາລະນະສຸກເມືອງບໍ່ແຕນ ໄດ້ຈັດພິທີເປີດຂະບວນວັນສັກຢາກັນພະຍາດແຫ່ງຊາດ (ວສຊໝາກແດງໃຫຍ່-ໝາກແດງນ້ອຍທົ່ວເມືອງ ເພື່ອບັນລຸໂຕເລກເປົ້າໝາຍເດັກໃນເກນອາຍຸ 9-59 ເດືອນ (ລຸ່ມ 5 ປີ) ໃຫ້ໄດ້ 95% ຂຶ້ນໄປ ເມື່ອບໍ່ດົນມານີ້ ທີ່ໂຮງຮຽນອະນຸບານນາກອກ ເປັນກຽດເຂົ້າຮ່ວມຂອງທ່ານ ບຸນພະລັງ ວິໄລສັກ ຮອງເຈົ້າເມືອງບໍ່ແຕນ, ມີທ່ານ ປະດິດ ວິໄລທອງ ຫົວໜ້າຫ້ອງການສາທາລະນະສຸກເມືອງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ບຸນພະລັງ ວິໄລສັກ ໄດ້ຍົກໃຫ້ເຫັນຄວາມອັນຕະລາຍ, ອາການ, ການປິ່ນປົວ ແລະ ການປ້ອງກັນຂອງພະຍາດໝາກແດງ ໂດຍການສັກວັກຊິນປ້ອງກັນພະຍາດໝາກແດງໃຫ້ເດັກທີ່ມີອາຍຸແຕ່ 9-59 ເດືອນໃຫ້ເດັກທຸກໆຄົນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງເປີດຂະບວນ ວສຊ ໃຫ້ວັກຊິນປ້ອງກັນພະຍາດໝາກແດງໃນປີ 2024 ໃນລະຫວ່າງວັນທີ 20-31 ພຶດສະພາ ຮຽກຮ້ອງມາຍັງຄະນະກຳມະການຮັກສາສຸຂະພາບແມ່ ແລະ ເດັກ (ຄມດ) ຂັ້ນເມືອງສຸມໃສ່ໂຄສະນາປຸກລະດົມປະຊາຊົນ ຫຼືຜູ້ປົກຄອງເດັກນຳເອົາລູກຫຼານໄປຮັບວັກຊິນຄັ້ງນີ້ໃຫ້ກວ້າງຂວາງ ແລະ ທົ່ວເຖິງເປົ້າໝາຍ. ທ່ານຮອງເຈົ້າເມືອງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງໄດ້ຮ່ວມກັນໃຫ້ວິຕາມິນອາ (A) ແລະ ສັກວັກຊິນປ້ອງກັນພະຍາດໝາກແດງໃຫຍ່-ໝາກແດງນ້ອຍ. (ຂ່າວ-ພາບ: ສາຍຄຳ ບຸນຍາວົງ )

## ສຳເລັດກອງປະຊຸມສະຫຼຸບວຽກງານຊາວໜຸ່ມ ປະຈຳປີ ຂອງກະຊວງການຕ່າງປະເທດ





ເມື່ອບໍ່ດົນມານີ້,ທີ່ກະຊວງການຕ່າງປະເທດ ໄດ້ມີກອງປະຊຸມສະຫຼຸບວຽກງານຊາວໜຸ່ມປະຈຳປີ 2023 ແລະ ກຳນົດທິດທາງແຜນການປີ 2024 ໂດຍການໃຫ້ກຽດເປັນປະທານຂອງ ສະຫາຍ ຕິ່ງ ສຸກສັນ ຮອງເລຂາຄະນະພັກກະຊວງ ຮອງລັດຖະມົນຕີກະຊວງການຕ່າງປະເທດ, ມີບັນດາສະຫາຍຄະນະພັກກະຊວງ, ເລຂາໜ່ວຍພັກ ແລະ ຕາງໜ້າໜ່ວຍພັກຈາກຫ້ອງການ ແລະ ບັນດາກົມຕ່າງໆ ຂອງກະຊວງການຕ່າງປະເທດ, ແຂກຖືກເຊີນຈາກສູນກາງຊາວໜຸ່ມ ແລະ ກະຊວງອ້ອມຂ້າງຈຳນວນໜຶ່ງ, ພ້ອມດ້ວຍສະມາຊິກຊາວໜຸ່ມຂອງກະຊວງການຕ່າງປະເທດເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້,ສະຫາຍ ນາງ ມຸກດາວັນ ສີສຸລິດ ເລຂາຄະນະບໍລິຫານງານຊາວໜຸ່ມກະຊວງການຕ່າງປະເທດ ໄດ້ຂຶ້ນຜ່ານບົດສະຫຼຸບການເຄື່ອນໄຫວວຽກງານຊາວໜຸ່ມ ປະຈຳປີ 2023 ຊຶ່ງໄດ້ຍົກ ໃຫ້ເຫັນບັນດາຜົນງານພົ້ນເດັ່ນ ແລະ ບາງດ້ານທີ່ຕ້ອງໄດ້ເອົາໃຈໃສ່ໃນການເຄື່ອນໄຫວໃນໄລຍະຜ່ານມາ ໂດຍສະເພາະການລົງເລິກດ້ານການເມືອງ-ແນວຄິດ ຕໍ່ສະມາຊິກຊາວໜຸ່ມ ໃນໄລຍະທີ່ມີສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ ທີ່ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການດຳລົງຊີວິດຂອງສະມາຊິກຊາວໜຸ່ມ ໃນປັດຈຸບັນ. ຄຽງຄູ່ກັນນັ້ນ, ຍັງໄດ້ກຳນົດທິດທາງແຜນການເຄື່ອນໄຫວວຽກງານຊາວໜຸ່ມ ປະຈຳປີ 2024 ຕິດພັນກັບບັນດາໂຄງການ, ແຜນງານທີ່ຄະນະບໍລິຫານງານຊາວໜຸ່ມ ຄັ້ງທີ XI ໃຫ້ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ພ້ອມດຽວກັນນັ້ນ, ກອງປະຊຸມ ຍັງໄດ້ມອບ-ຮັບໃບຍ້ັງຢືນ 4 ບຸກ ໃຫ້ບັນດາໜ່ວຍຊາວໜຸ່ມອ້ອມຂ້າງກະຊວງ ຈຳນວນ 41 ໜ່ວຍ (17 ໜ່ວຍຊາວໜຸ່ມພາຍໃນກະຊວງ ແລະ 24 ໜ່ວຍຊາວໜຸ່ມທີ່ຕ່າງປະເທດ) ແລະ ໃບຍ້ອງຍໍຊາວໜຸ່ມຕົວແບບໃຫ້ສະມາຊິກຊາວໜຸ່ມກະຊວງການຕ່າງ ປະເທດ ຈຳນວນ 37 ສະຫາຍ (17 ສະຫາຍ ຈາກໜ່ວຍຊາວໜຸ່ມພາຍໃນກະຊວງ ແລະ 20 ສະຫາຍ ຈາກໜ່ວຍຊາວໜຸ່ມທີ່ຕ່າງປະເທດ), ໃຫ້ກຽດມອບໂດຍ ສະຫາຍ ຕິ່ງ ສຸກສັນ.

ປັດຈຸບັນ, ກະຊວງການຕ່າງປະເທດ ມີຮາກຖານຊາວໜຸ່ມ ແລະ ໜ່ວຍຊາວໜຸ່ມ ຢູ່ພາຍໃນ ແລະ ຕ່າງປະເທດ ຈຳນວນ 193 ໜ່ວຍ (ຢູ່ພາຍໃນກະຊວງຈຳນວນ 17 ໜ່ວຍ ແລະ ສຳນັກງານຜູ້ຕາງໜ້າການທູດ ສປປ ລາວປະຈຳຢູ່ຕ່າງປະເທດ ຈຳນວນ 30 ໜ່ວຍ) ແລະ 8 ຮາກຖານ (146 ໜ່ວຍທີ່ຂຶ້ນກັບ). ສະມາຊິກຊາວໜຸ່ມທັງໝົດທີ່ຂຶ້ນກັບກະຊວງການຕ່າງປະເທດ ທີ່ຢູ່ທັງພາຍໃນ ແລະ ຕ່າງປະເທດ ມີຈຳນວນ 3.500 ກວ່າສະຫາຍ, ຍິງ 1.600 ກວ່າສະຫາຍ. ໃນນີ້, ຊາວໜຸ່ມພາຍໃນກະຊວງການຕ່າງປະເທດ ມີ 400 ກວ່າສະຫາຍ, ຍິງ 200 ກວ່າສະຫາຍ; ຊາວໜຸ່ມທີ່ເປັນພະນັກງານຈາກຂະແໜງການອື່ນ, ນັກສຶກສາ ແລະ ຊາວໜຸ່ມທີ່ໄປອອກແຮງງານຢູ່ຕ່າງປະເທດ ມີ 3.000 ກວ່າສະຫາຍ.

ໃນຕອນທ້າຍ, ກອງປະຊຸມ ຍັງໄດ້ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນຳຂອງສະຫາຍປະທານກອງປະຊຸມ ຊຶ່ງໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານອັນດີເດັ່ນ ໃນການປະຕິບັດວຽກງານຊາວໜຸ່ມໃນໄລຍະ 1 ປີຜ່ານມາ ເຫັນໄດ້ວ່າ ຄະນະບໍລິຫານງານຊາວໜຸ່ມກະຊວງ ຍາມໃດກໍໄດ້ເອົາໃຈໃສ່ຊີ້ນຳ-ນຳພາສະມາຊິກຊາວໜຸ່ມຂອງຕົນໃຫ້ມີຄວາມຕື່ນຕົວສູງໃນການປະຕິບັດໜ້າທີ່ວຽກງານກໍຄືການປະກອບສ່ວນຢ່າງຕັ້ງໜ້າປະຕິບັດສຳເລັດໜ້າທີ່ການເມືອງທີ່ຄະນະພັກ-ຄະນະນຳກະຊວງ ວາງອອກ. ຄຽງຄູ່ກັນນັ້ນ, ຍັງສະແດງຄວາມຊົມເຊີຍ ບັນດາໜ່ວຍຊາວໜຸ່ມອ້ອມຂ້າງກະຊວງການຕ່າງປະເທດທີ່ໄດ້ສຳເລັດການຈັດກອງປະຊຸມປະເມີນຜົນການດຳເນີນຂໍ້ແຂ່ງຂັນວຽກງານ 4 ບຸກ, ພ້ອມນັ້ນ, ແຕ່ລະໜ່ວຍກໍໄດ້ມີການຄັດເລືອກຊາວໜຸ່ມຕົວແບບດີເດັ່ນ ຊຶ່ງເປັນຜູ້ທີ່ມີຄວາມຫ້າວຫັນ ໃນການປະຕິບັດໜ້າທີ່ວຽກງານ ແລະ ເປັນແບບຢ່າງທີ່ດີໃຫ້ສະມາຊິກຊາວໜຸ່ມໃນໜ່ວຍຂອງຕົນ ຊຶ່ງສິ່ງດັ່ງກ່າວສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ປະຕິບັດໜ້າທີ່ການເມືອງ ໃນການປັບປຸງກົງຈັກການຈັດຕັ້ງກໍຄືການກໍ່ສ້າງຄວາມເຂັ້ມແຂງທາງດ້ານແນວຄິດການເມືອງ, ການຝຶກຝົນຫຼໍ່ຫຼອມຮ່ຳຮຽນ, ການຈັດຕັ້ງ ແລະ ວິຊາສະເພາະໃຫ້ບັນດາສະມາຊິກພາຍໃນໜ່ວຍຕົນ.

(ຂ່າວ: ກຕທ)

## 20 ປີ ແຫ່ງການຮ່ວມມື ຂອງສະມາຄົມມິດຕະພາບ ລາວ - ສ ເກົາຫຼີ

*ໂດຍ: ຣັດສະໝີ ດວງສັດຈະ*



ກ່ອນໜ້ານີ້ 2 ທົດສະວັດຄືນັບແຕ່ວັນທີ 21.05.2004 ເພື່ອຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງ 2 ຊາດ ໂດຍສະເພາະການທູດປະຊາຊົນຂອງ 2 ປະເທດ ສປປ ລາວ ແລະ ສ ເກົາຫຼີ; ສະມາຄົມມິດຕະພາບ ສ ເກົາຫຼີ - ລາວ (KLFA) ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ແລະ ມີການພົບປະຫາລື-ຮ່ວມມືກັນຢ່າງຕັ້ງໜ້າ ແລະ ມີໝາກຜົນຕົວຈິງໃນຫຼາຍດ້ານ, ປະກອບສ່ວນເຂົ້າໃນການຮັດແໜ້ນຄວາມສາມັກຄີ, ສົ່ງເສີມ, ພັດທະນາ ແລະ ປະຕິບັດໜ້າທີ່ການທູດປະຊາຊົນ ລະຫວ່າງ 2 ປະເທດເຊັ່ນ: ດ້ານວັດທະນະທຳ-ສັງຄົມ, ການຄ້າ, ການລົງທຶນ, ການສຶກສາ, ການທ່ອງທ່ຽວ, ສາທາລະນະສຸກ, ກິລາ ແລະ ອື່ນໆ.

ສ່ວນສະມາຄົມມິດຕະພາບລາວ-ສ ເກົາຫຼີ (LKFA) ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2009; ໂດຍເລີ່ມແຕ່ກອງປະຊຸມຮ່ວມປະຈຳປີ ຂອງສອງຝ່າຍ ຄັ້ງທຳອິດໃນປີ 2010 ເປັນຕົ້ນມາ, 2 ສະມາຄົມ ໄດ້ມີການພົວພັນຮ່ວມມືກັນຢ່າງໃກ້ຊິດ ແລະ ມີຜົນສຳເລັດເປັນກ້າວໆມາ; ມາເຖິງປັດຈຸບັນ KLFA ໄດ້ໃຫ້ທຶນຊ່ວຍເຫຼືອກໍ່ສ້າງອາຄານໂຮງຮຽນປະຖົມສົມບູນ 3 ຫຼັງ ຄື: ຢູ່ບ້ານຊຽງແລນາ ເມືອງປາກງື່ມ; ບ້ານຫ້ວຍລ້າ ເມືອງສັງທອງ, ນະຄອນຫຼວງວຽງຈັນ ແລະ ບ້ານກ້ານ ເມືອງຊຳເໜືອ ແຂວງ ຫົວພັນ ຊຶ່ງໄດ້ມີການມອບ-ຮັບຢ່າງເປັນທາງການໃຫ້ອຳນາດການປົກຄອງ ແລະ ປະຊາຊົນບ້ານດັ່ງກ່າວ ໃນວັນທີ 21 ມີນາ 2024. ຄຽງຄູ່ກັບການຊ່ວຍເຫຼືອກໍ່ສ້າງບັນດາໂຮງຮຽນເຫຼົ່ານີ້ແລ້ວ; ຍັງໄດ້ຮັບເຄື່ອງຊ່ວຍເຫຼືອອື່ນໆ ອີກຫຼາຍຢ່າງຈາກ KLFA ເຊັ່ນ: ເຄື່ອງນຸ່ງຫົ່ມ, ເກີບ, ຢາປົວພະຍາດ, ອຸປະກອນການແພດ, ອຸປະກອນການສຶກສາ ແລະ ອື່ນໆ. ໃນໄລຍະ 2 ທົດສະວັດຜ່ານມາ KLFA ໄດ້ລະດົມທຶນຮອນ ແລະ ວັດຖຸປັດໃຈ ເປັນມູນຄ່າລວມທັງໝົດ ຈຳນວນ 4.000.000 ກວ່າໂດລາ ເພື່ອນຳມາຊ່ວຍເຫຼືອປະຊາຊົນລາວ ແລະ ເຄື່ອນໄຫວວຽກງານຂອງຕົນ.

ກອງປະຊຸມຄົບຄະນະປະຈຳປີ ຄັ້ງທີ XII ລະຫວ່າງ LKFA ແລະ KLFA ຈັດຂຶ້ນໃນກາງປີ 2023 ທີ່ນະຄອນຫຼວງເຊອູນ ສ ເກົາຫຼີ 2 ຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນ ແລະ ການຮ່ວມມື ລະຫວ່າງ ສປປ ລາວ ແລະ ສ ເກົາຫຼີ, ເວົ້າສະເພາະການພົວພັນຮ່ວມມື ລະຫວ່າງ LKFA ແລະ KLFA ທີ່ໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍຢ່າງຕໍ່ເນື່ອງ ເຮັດໃຫ້ປະຊາຊົນຂອງສອງປະເທດມີຄວາມເຂົ້າໃຈອັນດີຕໍ່ກັນ, ໄປມາຫາສູ່ ຢ້ຽມຢາມ-ທ່ອງທ່ຽວ, ຮັກແພງຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແລະ ຮ່ວມມືກັນເພື່ອການພັດທະນາ. ສາຍພົວພັນດັ່ງກ່າວນີ້ ໄດ້ກາຍເປັນກົນໄກເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງລັດຖະບານ ແລະ ປະຊາຊົນທັງສອງປະເທດ ເພື່ອເສີມສ້າງຜົນປະໂຫຍດຮ່ວມກັນຢ່າງກວ້າງຂວາງ.

ໃນກອງປະຊຸມດັ່ງກ່າວຍັງໄດ້ບັນລຸການລົງນາມຮ່ວມກັນໃນບົດບັນທຶກຄວາມເຂົ້າໃຈໄລຍະ 5 ປີ (2023-2027) ເພື່ອເປັນບ່ອນອີງໃຫ້ການຈັດຕັ້ງປະຕິບັດການພົວພັນຮ່ວມມືລະຫວ່າງສອງສະມາຄົມມິດຕະພາບ ໃຫ້ມີບາດກ້າວອັນໃໝ່ໃນຕໍ່ໜ້າ ໂດຍຍັງຈະສືບຕໍ່ເປັນຂົວຕໍ່ຊຸກຍູ້ ແລະ ໃຫ້ການສະໜັບສະໜູນ ເພື່ອສົ່ງເສີມດ້ານການຄ້າ, ການລົງທຶນ, ການທ່ອງທ່ຽວ, ການສຶກສາ, ສາທາລະນະສຸກ, ສິລະປະວັດທະນະທຳ ໃຫ້ເພີ່ມຂຶ້ນ; ສືບຕໍ່ໂຄສະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ການທ່ອງທ່ຽວຂອງແຕ່ລະປະເທດ ໃຫ້ປະຊາຊົນສອງຊາດໄດ້ຮັບຊາບ ເພື່ອສົ່ງເສີມການທ່ອງທ່ຽວຊຶ່ງກັນ ແລະ ກັນ; ສືບຕໍ່ສະໜອງຂໍ້ມູນທາງດ້ານການລົງທຶນໃຫ້ ສ ເກົາຫຼີ ເພື່ອດຶງດູດນັກລົງທຶນ ສ ເກົາຫຼີ ເຂົ້າມາລົງທຶນຢູ່ ສປປ ລາວ ໃຫ້ນັບມື້ນັບຫຼາຍຂຶ້ນ; ສອງຝ່າຍຍັງເຫັນດີເປັນເອກະພາບ ໃນການແລກປ່ຽນການຢ້ຽມຢາມ ພ້ອມທັງຜັດປ່ຽນກັນເປັນເຈົ້າພາບຈັດກອງປະຊຸມຄົບຄະນະປະຈຳປີ ຢ່າງເປັນປົກກະຕິ.

ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ KLFA ຄົບຮອບ 20 ປີ (21.05.2004-21.05.2024); ທ່ານ ຄຳສອຍ ແກ້ວດາລາວົງ ປະທານ LKFA ໄດ້ສົ່ງຈົດໝາຍອວຍພອນໄປຍັງທ່ານ Oh Myung Hwan ປະທານ KLFA ທີ່ນະຄອນຫຼວງເຊອູນ ສ ເກົາຫຼີ ຊຶ່ງມີເນື້ອໃນວ່າ: “ຂໍສະແດງຄວາມຊົມເຊີຍ ແລະ ຄຳອວຍພອນອັນອົບອຸ່ນມາຍັງທ່ານ ພ້ອມດ້ວຍບັນດາກຳມະການ, ບັນດາສະມາຊິກ KLFA. ໃນສອງທົດສະວັດຜ່ານມາ, ສອງສະມາຄົມຂອງພວກເຮົາ ໄດ້ຮ່ວມມື ແລະ ຮ່ວມກັນປະຕິບັດຫຼາຍໂຄງການ, ຫຼາຍກິດຈະກຳ ເຊັ່ນ: ກໍ່ສ້າງໂຮງຮຽນປະຖົມ 3 ແຫ່ງ, ເຄື່ອນໄຫວແລກປ່ຽນຄະນະຜູ້ແທນ, ເປັນເຈົ້າພາບຈັດກອງປະຊຸມໃຫຍ່ປະຈຳປີ, ບໍລິຈາກ ແລະ ສະໜັບສະໜູນສິ່ງຂອງຕ່າງໆ ແລະ ອື່ນໆ.

ຂ້າພະເຈົ້າ ມີຄວາມເຊື່ອໝັ້ນຢ່າງແຂງແຮງວ່າ, ໃນຕໍ່ໜ້າ KLFA ຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊຸກຍູ້ການພົວພັນຮ່ວມມື ຂອງສອງປະເທດ ແລະ ປະຊາຊົນສອງຊາດ ສປປ ລາວ ແລະ ສ ເກົາຫຼີ ກໍຄື 2 ສະມາຄົມມິດຕະພາບ ຂອງພວກເຮົາ ໃຫ້ມີການພັດທະນາ ແລະ ເສີມຂະຫຍາຍຂຶ້ນຢ່າງບໍ່ຢຸດຢັ້ງ”.

## ສະຫຼຸບຖອດຖອນບົດຮຽນ ວຽກງານພະລາທິການທົ່ວກົມໃຫຍ່ການເມືອງກອງທັບ





ກອງປະຊຸມສະຫຼຸບຖອດຖອນບົດຮຽນວຽກງານພະລາທິການທົ່ວກົມໃຫຍ່ການເມືອງກອງທັບ ປະຈຳປີ 2023 ແລະ ວາງທິດທາງແຜນການປະຈຳປີ 2024, ໄດ້ຈັດຂຶ້ນໃນວັນທີ 21 ພຶດສະພາ ຜ່ານມາ ໂດຍການເປັນປະທານຂອງທ່ານ ພົນຈັດຕະວາ ພູມີ ດາລາເພັດ ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ, ມີຄະນະກົມ, ຫ້ອງການ, ກົມກອງ, ພະແນກການ, ພະນັກງານວິຊາການ-ວິຊາສະເພາະພະລາທິການທົ່ວກົມໃຫຍ່ການເມືອງກອງທັບເຂົ້າຮ່ວມ.

ທ່ານ ພັນເອກ ໄມທອນ ແກ້ວລໍວັນເຮືອງ ຫົວໜ້າຫ້ອງການບໍລິຫານ ກົມໃຫຍ່ການເມືອງກອງທັບ ໄດ້ສະຫຼຸບຕີລາຄາຄືນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຮັບປະກັນພະລາທິການໃນຫຼາຍດ້ານທີ່ພົ້ນເດັ່ນໃນໄລຍະ 1 ປີຜ່ານມາ ຊຶ່ງໄດ້ຍົກໃຫ້ເຫັນຜົນສຳເລັດດ້ານຕ່າງໆທີ່ກົມກອງຍາດມາໄດ້ ເປັນຕົ້ນແມ່ນສາມາດຮັບປະກັນພະລາທິການໃຫ້ບັນດາກົມກອງ ໃນການເຄື່ອນໄຫວຫັດແອບຮ່ຳຮຽນຊ້ອມຮົບ, ກຽມພ້ອມສູ້ຮົບ ແລະ ປະຕິບັດໜ້າທີ່ຕາມຄຳສັ່ງຂອງຂັ້ນເທິງໄດ້ມີຜົນສຳເລັດເປັນຢ່າງດີ, ຮັບປະກັນຊີວິດການເປັນຢູ່ ແລະ ການຈັດຕັ້ງລ້ຽງດູທັບ ເປັນຕົ້ນແມ່ນເຄື່ອງນຸ່ງຫົ່ມ, ການຜະລິດສະບຽງອາຫານ, ການຈັດຕັ້ງກິນດື່ມລວມໝູ່, ຮັບເບີກ-ຈ່າຍນ້ຳມັນ, ຮັບປະກັນເບີກຈ່າຍເງິນເດືອນສາມາດປະຕິບັດໄດ້ເປັນປົກກະຕິຄົບຖ້ວນທັນກຳນົດເວລາ ແລະ ໄປຮອດໄປເຖິງບຸກຄົນຕົວຈິງ, ເອົາໃຈໃສ່ຄຸ້ມຄອງບົວລະບັດປົກປັກຮັກສາວັດຖຸພາຫະນະເຕັກນິກເຂົ້າສູ່ລະບົບລະບຽບ ແລະ ຮັດກຸມ, ການຄຸ້ມຄອງວັດຖຸຢູ່ສາງມີຄວາມປອດໄພ 100%, ພະນັກງານໄດ້ຮັບການປັບປຸງຍົກລະດັບຄວາມຮູ້ວິຊາສະເພາະມີການຂະຫຍາຍຕົວທັງປະລິມານ ແລະ ຄຸນນະພາບມີຫຼາຍກົມກອງສາມາດປະຕິບັດທິດນຳເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໂດຍສະເພາະໃນດ້ານຜະລິດກະສິກຳປູກຝັງ- ລ້ຽງສັດ ເພື່ອສະໜອງເຂົ້າເຮືອນຄົວລວມ ແລະ ຜະລິດເປັນສິນຄ້າຫາລາຍໄດ້ເພື່ອມາບູລະນະສ້ອມແປງສະຖານທີ່ພັກອາໄສຄ້າຍຄູຂອງຕົນເອງເຂົ້າສູ່ລະບົບລະບຽບດີຂຶ້ນກວ່າເກົ່າ.

ໂອກາດນີ້, ທ່ານ ພົນຈັດຕະວາ ພູມີ ດາລາເພັດ ໄດ້ເນັ້ນໜັກໃຫ້ຄະນະພັກ-ຄະນະບັນຊາທຸກຂັ້ນກໍຄືຜູ້ຊີ້ນຳວຽກງານພະລາທິການຕະຫຼອດຮອດຜູ້ທີ່ເຮັດວຽກງານພະລາທິການ ຈົ່ງພ້ອມກັນເຊື່ອມຊຶມຢ່າງເລິກເຊິ່ງຕໍ່ແນວທາງແຜນນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດແຫ່ງຊາດແຕ່ລະໄລຍະ, ກຳແໜ້ນສະພາບຄວາມເປັນຈິງທາງດ້ານເສດຖະກິດ-ການເງິນຂອງຊາດ ທີ່ພວມປະເຊີນກັບສິ່ງແວດລ້ອມທ້າທາຍຫຼາຍຢ່າງ, ຕ້ອງເຊື່ອມຊຶມບັນດາທັດສະນະກ່ຽວກັບວຽກງານພະລາທິການ, ເປັນເຈົ້າການຊີ້ນຳ-ນຳພາກົມກອງໃນການຮັບປະກັນການດຳລົງຊີວິດຂອງພະນັກງານ-ນັກຮົບ, ເອົາໃຈໃສ່ປົກປັກຮັກສາວັດຖຸພະລາທິການ ແລະ ການຄຸ້ມຄອງການຮັບ-ການຈ່າຍ ເປັນຕົ້ນແມ່ນການຄຸ້ມຄອງງົບປະມານ, ຄຸ້ມຄອງການຫາລາຍໄດ້ນຳໃຊ້ໃຫ້ຖືກເປົ້າໝາຍ, ເອົາໃຈໃສ່ປັບປຸງການຈັດຕັ້ງພະລາທິການໃຫ້ໄດ້ຄົບຖ້ວນດ້ານຈຳນວນ ແລະ ຄຸນນະພາບ, ພ້ອມກັນນັ້ນກໍ ຕ້ອງເສີມຂະຫຍາຍລະບອບແບບແຜນວິທີເຮັດວຽກຢ່າງມີປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ, ເຂົ້າຮ່ວມຢ່າງຕັ້ງໜ້າວຽກງານພົວພັນ-ຮ່ວມມື ດ້ານພະລາທິການ ແລະ ການເງິນກັບປະເທດເພື່ອນມິດຍຸດທະສາດນຳເອົາບົດຮຽນອັນດີເຂົ້າມານຳໃຊ້ໃນການຄຸ້ມຄອງກອງທັບ ເພື່ອພ້ອມກັນສູ້ຊົນປະຕິບັດບັນດາຄາດໝາຍທີ່ໄດ້ກຳນົດໄວ້ໃຫ້ປະກົດຜົນເປັນຈິງ.

(ຂ່າວ: ຄຳອ້າຍ ທອງວັນ)

## ບໍລິສັດ ສະຕາ ໂທລະຄົມ ກໍ່ສ້າງຫ້ອງການຫຼັງໃໝ່ ຢູ່ແຂວງໄຊສົມບູນ




ເມື່ອບໍ່ດົນມານີ້, ບໍລິສັດ ສະຕາ ໂທລະຄົມ ຈຳກັດ (Unitel) ໄດ້ຈັດພິທີວາງສີລາລຶກກໍ່ສ້າງຫ້ອງການຫຼັງໃໝ່ ທີ່ບ້ານພູຫົວຊ້າງ ເມືອງອະນຸວົງ ແຂວງໄຊສົມບູນ ໂດຍການເຂົ້າຮ່ວມຂອງທ່ານ ສຸກສະຫວາດ ວິງພູມເຫຼັກ ຮອງເຈົ້າແຂວງໄຊສົມບູນ, ມີທ່ານ ພິຈອ ບີມືອ ໄພດາເຍຍຈ່າ ຮອງຜູ້ອຳນວຍການໃຫຍ່ຈັດຕັ້ງບໍລິຫານບໍລິສັດ ສະຕາ ໂທລະຄົມຈຳກັດ, ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຄຳແສງ ນະຄອນສຸກ ຜູ້ອຳນວຍການບໍລິສັດ ສະຕາ ໂທລະຄົມ ຈຳກັດ ສາຂາແຂວງໄຊສົມບູນ ໄດ້ລາຍງານວ່າ: ໃນໄລຍະດຳເນີນທຸລະກິດ 5 ປີຜ່ານມາ ສາຂາແຂວງໄຊສົມບູນ ສາມາດຂະຫຍາຍເຄືອຂ່າຍໂທລະຄົມ ທີ່ກວ້າງຂວາງ ໄດ້ຫຼາຍກວ່າ 150 ຕູ້ສະຖານີ, ສັນຍານເຂດປົກຄຸມກວມເອົາ 95,5% ຂອງບັນດາເມືອງ ແລະ ກວມເອົາ 96% ຂອງພົນລະເມືອງທົ່ວແຂວງ ຊຶ່ງນັບແຕ່ປີ 2019-2023 ສາມາດມອບພັນທະອາກອນໃຫ້ລັດຖະບານ ກໍຄືແຂວງໄຊສົມບູນ ຈຳນວນ 3,3 ຕື້ກວ່າກີບ ເພື່ອຮັບປະກັນໃຫ້ບໍລິສັດໄດ້ຮັບການພັດທະນາເຕີບໃຫຍ່ຂະຫຍາຍຕົວໃນຕໍ່ໜ້າ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ສ້າງຫ້ອງການຫຼັງໃໝ່ຂຶ້ນ ຊຶ່ງເປັນຕຶກອາຄານສູງ 4 ຊັ້ນ ມູນຄ່າການກໍ່ສ້າງ 10 ຕື້ກວ່າກີບ ໂດຍແມ່ນບໍລິສັດສຸກປັນຍາກໍ່ສ້າງຈຳກັດຜູ້ດຽວເປັນຜູ້ຮັບເໝົາກໍ່ສ້າງ.

ໂອກາດນີ້, ທ່ານ ສຸກສະຫວາດ ວິງພູມເຫຼັກ ໄດ້ຍົກໃຫ້ເຫັນເຖິງຄວາມໝາຍສຳຄັນຂອງຂະແໜງໂທລະຄົມ ຊຶ່ງເປັນປັດໄຈສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍຄືຊ່ວຍອຳນວຍຄວາມສະດວກໃຫ້ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດເວົ້າລວມ, ເວົ້າສະເພາະແມ່ນການບໍລິການຮັບໃຊ້ພະນັກງານ, ທະຫານ ຕຳຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າໃນທົ່ວແຂວງ ໃຫ້ມີການຕິດຕໍ່ພົວພັນວຽກງານຕ່າງໆໄດ້ຢ່າງສະດວກສະບາຍ ຫວັງວ່າໂຄງການດັ່ງກ່າວຈະດຳເນີນການກໍ່ສ້າງສຳເລັດຕາມແຜນການທີ່ວາງໄວ້ ທັງຮັບປະກັນໃຫ້ການບໍລິການສັງຄົມນັບມື້ກວ້າງຂວາງຂຶ້ນກວ່າເກົ່າ.

(ຂ່າວ-ພາບ: ພາພອນ ນະວົງໄຊ)

## ເມືອງມະຫາໄຊ ສະຫຼອງຫໍຫຼັກເມືອງ ແລະ ປະດິດສະຖານຮູບປັ້ນ ປະທານ ໄກສອນ ພົມວິຫານ

ອຳນາດການປົກຄອງເມືອງມະຫາໄຊ ຮ່ວມກັບອຳນາດການປົກຄອງແຂວງຄຳມ່ວນ ແລະ ພາກສ່ວນກ່ຽວຂ້ອງໄດ້ຈັດງານບຸນສະເຫຼີມສະຫຼອງຫໍຫຼັກເມືອງ ແລະ ປະດິດສະຖານຮູບປັ້ນຂອງປະທານໄກສອນ ພົມວິຫານ ຂຶ້ນໃນລະຫວ່າງວັນທີ 19-20 ພຶດສະພານີ້ ໂດຍການເຂົ້າຮ່ວມຂອງທ່ານ ແກ້ວອຸດອນ ບຸດສີຂອນ ຮອງເຈົ້າແຂວງຄຳມ່ວນ, ທ່ານ ສົມບູນ ແກ້ວວົງສາ ເຈົ້າເມືອງມະຫາໄຊພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ພາຍໃນງານໄດ້ມີການ



ເຕົ້າໂຮມມວນຊົນຢູ່ຫ້ອງວ່າການເມືອງ ເພື່ອນຳເອົາພະພຸດທະຮູບ ແລະ ເສົາຫຼັກເມືອງເຂົ້າໄປຄາລະວະຕໍ່ພະອົງແສນທີ່ວັດແສນໄຊ (ເທສະບານເມືອງມະຫາໄຊເກົ່າ) ແລະ ໄດ້ທຳການແຫ່ພະພຸດທະຮູບ ແລະ ເສົາຫຼັກເມືອງມາປະດິດສະຖານຢູ່ຫໍຫຼັກເມືອງທີ່ສ້າງຂຶ້ນຢູ່ບໍລິເວນເດີ່ນຫ້ອງວ່າການປົກຄອງເມືອງມະຫາໄຊ ພ້ອມທັງນຳເອົາຮູບປັ້ນຂອງທ່ານປະທານ ໄກສອນ ພົມວິຫານ ມາປະດິດສະຖານຢູ່ບໍລິເວນເດີ່ນຫ້ອງວ່າການປົກຄອງເມືອງມະຫາໄຊ ໃນຄ່ຳຄືນໄດ້ມີພິທີ



ສູດສົມໂພດ ເພື່ອເປັນການເຄົາລົບນັບຖືໄຫວ້ ແລະ ສັກກາລະບູຊາ ທັງເປັນສະຖານທີ່ສຶກສາຮຽນຮູ້ຕໍ່ໄປ.

ໃນວັນທີ 20 ພຶດສະພາຜ່ານມານີ້ ໄດ້ມີພິທີໃສ່ບາດຖວາຍສັງຂະທານແດ່ພະສົງ 21 ອົງ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງຄຳມ່ວນ, ທ່ານ ພົດສະໄໝ ກອງຊາເດດ ປະທານແນວລາວສ້າງຊາດແຂວງ, ພ້ອມດ້ວຍການນຳເມືອງ ແລະ ມວນຊົນເຂົ້າຮ່ວມ.

ໂອກາດນີ້, ທ່ານ ເຈົ້າແຂວງ ພ້ອມຄະນະໄດ້ຮ່ວມປູກຕົ້ນແກ່ນຈັນຫອມຢູ່ບໍລິເວນເດີ່ນຫໍຫຼັກເມືອງ. ຫຼັງຈາກນັ້ນ, ຄະນະສົງ ແລະ ຄະນະນຳແຕ່ລະຂັ້ນຂອງເມືອງມະຫາໄຊ ກໍໄດ້ພ້ອມກັນເປັນເຈົ້າພາບເຈົ້າສັດທາຍົກຍອດຊໍ່ຟ້າຫໍຫຼັກເມືອງ ແລະ ປະກອບຍອດຊັດໃສ່ຈອມທາດປະສາດທີ່ເປັນບ່ອນປະດິດສະຖານຮູບປັ້ນຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ.

(ຂ່າວ-ພາບ: ແດງສະຫວັດ ແສນພານິດ)

## ສ້າງຄູຝຶກວຽກງານອາກອນລາຍໄດ້ ແລະ ກວດກາໄລ່ລຽງອາກອນໄດ້ເພີ່ມອີກ 40 ຄົນ

ກົມສ່ວຍສາອາກອນ ກະຊວງການເງິນ ໄດ້ສຳເລັດການຝຶກອົບຮົມສ້າງຄູຝຶກວຽກງານອາກອນລາຍໄດ້ ແລະ ກວດກາໄລ່ລຽງອາກອນປະຈຳປີ 2024 ໄດ້ເພີ່ມອີກ 40 ຄົນ, ຍິງ 7 ຄົນ ທີ່ມາຈາກກົມສ່ວຍສາອາກອນ ແລະ ສ່ວຍສາອາກອນປະຈຳແຂວງໃນເຂດພາກກາງ ແລະ ພາກໃຕ້ຂອງລາວ, ຊຸດອົບຮົມດັ່ງກ່າວໄດ້ດຳເນີນມາແຕ່ວັນທີ 29 ເມສາ ຜ່ານມາ ທີ່ຫ້ອງປະຊຸມສ່ວຍສາອາກອນປະຈຳແຂວງສະຫວັນນະເຂດ ແລະ ໄດ້ສຳເລັດເມື່ອບໍ່ດົນມານີ້ ໃຫ້ກຽດມອບໃບຢັ້ງຢືນຂອງທ່ານ ທຳມະລິດ ຣາຊະພົນ ຮອງຫົວໜ້າກົມສ່ວຍສາອາກອນ, ມີວິທະຍາກອນ, ສຳມະນາກອນເຂົ້າຮ່ວມ.

ທ່ານ ສູນທອນ ສຸລີສັກ ຫົວໜ້າພະແນກຝຶກອົບຮົມ ແລະ ພັດທະນາບຸກຄະລາກອນກົມສ່ວຍສາອາກອນ ກ່າວວ່າ: ການຝຶກອົບຮົມຄັ້ງນີ້ ເພື່ອສ້າງໃຫ້ພະນັກງານສ່ວຍສາອາກອນແຕ່ຂັ້ນສູນກາງຮອດທ້ອງຖິ່ນໃນຂອບເຂດທົ່ວປະເທດໄດ້ຍົກສູງທັກສະ, ຄວາມຮູ້, ຄວາມສາມາດກຳແໜ້ນດ້ານທິດສະດີ, ຫຼັກການ, ວິທີການ ແລະ ການປະຕິບັດຕົວຈິງ, ຝຶກໃຫ້ຜູ້ເຂົ້າຮ່ວມມີຄວາມຊຳນານງານໃນການສ້າງຄູຝຶກໃຫ້ກາຍເປັນຊ່ຽວຊານສະເພາະດ້ານ ກໍຄືວຽກງານອາກອນລາຍໄດ້. ການຝຶກອົບຮົມໃຊ້ເວລາຮຽນທັງໝົດ 15 ວັນ. ໃນນີ້, ຄູຝຶກວຽກງານອາກອນລາຍໄດ້ມີ 19 ຄົນ, ຍິງ 4 ຄົນ ແລະ ຄູຝຶກວຽກງານກວດກາໄລ່ລຽງ 21 ຄົນ, ຍິງ 3 ຄົນ.

(ຂ່າວ: ສະຫວັນນະເຂດ)



## ຫຼວງພະບາງ ເປີດຂະບວນການສັກວັກຊີນກັນພະຍາດໝາກແດງ



ພິທີເປີດຂະບວນການສັກວັກຊີນກັນພະຍາດໝາກແດງໃຫຍ່-ໝາກແດງນ້ອຍ ໃນໂອກາດວັນສັກຢາກັນພະຍາດແຫ່ງຊາດ (ວສຊ) ທົ່ວແຂວງຫຼວງພະບາງໄດ້ຈັດຂຶ້ນເມື່ອບໍ່ດົນມານີ້ ທີ່ໂຮງຮຽນປະຖົມສົມບູນຫຼວງພະບາງ ນະຄອນ-ຫຼວງພະບາງ ແຂວງຫຼວງພະບາງ ມີທ່ານນາງ ວິໄລພອນ ຖະໜອມສັກ ປະທານແນວລາວສ້າງຊາດນະຄອນ, ມີຫົວໜ້າພະແນກສາທາລະນະສຸກແຂວງ, ຜູ້ຕາງໜ້າອົງການກາວີປະຈຳລາວ, ຄະນະກຳມະການເພື່ອແມ່ ແລະ ເດັກຂັ້ນແຂວງ-ນະຄອນ, ຜູ້ປົກຄອງເດັກ ແລະ ເດັກກຸ່ມເປົ້າໝາຍເຂົ້າຮ່ວມ.

ທ່ານນາງ ວິໄລພອນ ຖະໜອມສັກ ກ່າວວ່າ: ການເປີດຂະບວນການສັກວັກຊີນປ້ອງກັນພະຍາດໃນຄັ້ງນີ້ ໂດຍຈະເລັ່ງໃສ່ກຸ່ມເປົ້າໝາຍເດັກນ້ອຍທີ່ມີອາຍຸ 9 ຫາ 59 ເດືອນ ຫຼືຕ່ຳກວ່າ 5 ປີໃຫ້ໄດ້ຮັບການສັກວັກຊີນກວມ 95% ຂຶ້ນໄປ ສະເພາະນະຄອນ-ຫຼວງພະບາງມີປະຊາກອນກຸ່ມເປົ້າໝາຍ 5.977 ຄົນ.

ຂະບວນການສັກວັກຊີນຄັ້ງນີ້ ຈະດຳເນີນໄປພ້ອມໆກັນທຸກເມືອງ ແລະ ນະຄອນ-ຫຼວງພະບາງໃນລະຫວ່າງວັນທີ 20-31 ພຶດສະພານີ້ ຊຶ່ງມີເດັກໃນກຸ່ມເປົ້າໝາຍທັງໝົດ 38.853 ຄົນ ຊຶ່ງໄດ້ກຳນົດຈຸດບໍລິການມີໂຮງໝໍແຂວງ, ໂຮງໝໍເມືອງ, ໂຮງໝໍນ້ອຍ ແລະ ຈຸດບໍລິການເຄື່ອນທີ່ໃນແຕ່ລະບ້ານ ເພື່ອໃຫ້ເດັກໃນກຸ່ມເປົ້າໝາຍໄດ້ຮັບການສັກວັກຊີນຢ່າງຄົບຖ້ວນ ຍົກເວັ້ນກໍລະນີບໍ່ມີຄວາມພ້ອມທາງດ້ານສຸຂະພາບ ແຕ່ຈະມີການສັກຄືນເມື່ອສຸຂະພາບແຂງແຮງດີ. ພ້ອມນີ້, ຈະມີການເກັບກຳບັນຊີປະຊາກອນທີ່ເຄື່ອນຍ້າຍເຂົ້າ-ອອກຢ່າງລະອຽດ ເພື່ອບໍ່ໃຫ້ເດັກໃນກຸ່ມເປົ້າໝາຍພາດໂອກາດການສັກວັກຊີນໃນຄັ້ງນີ້, ຄຽງຄູ່ກັນນີ້ຈະມີການໃຫ້ວິຕາມິນ A ແລະ ສັກວັກຊີນປ້ອງກັນພະຍາດໃນຮອບວຽນປົກກະຕິສຳລັບເດັກແຕ່ນີ້ເກີດຫາ 1 ປີ.

(ຂ່າວ: ຫຼວງພະບາງ)



## ເມືອງເງິນ ເປີດຂະບວນການ ວສຊ ໃຫ້ກຸ່ມເປົ້າໝາຍ 1.767 ຄົນ

ຫ້ອງການສາທາລະນະສຸກເມືອງເງິນ ແຂວງໄຊຍະບູລີ ໄດ້ເປີດຂະບວນການວັນສັກຢາກັນພະຍາດແຫ່ງຊາດ (ວສຊ) ໝາກແດງໃຫຍ່-ໝາກແດງນ້ອຍ ໃນກຸ່ມເປົ້າໝາຍ 1.767 ຄົນ ໃນທົ່ວເມືອງ ຂຶ້ນໃນວັນທີ 20 ພຶດສະພາຜ່ານມາ ທີ່ຫ້ອງປະຊຸມບ້ານຂອນ ເມືອງເງິນ ໂດຍເປັນກຽດເຂົ້າຮ່ວມຂອງທ່ານ ບຸນເລື່ອນ ບົວໄລ ຮອງເຈົ້າເມືອງເງິນ ປະທານຄະນະກຳມາທິການເພື່ອແມ່ ແລະ ເດັກຂັ້ນເມືອງ, ມີຫົວໜ້າ-ຮອງຫົວໜ້າຫ້ອງການກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ບຸນເລື່ອນ ບົວໄລ ກ່າວວ່າ: ການເປີດຂະບວນການຄັ້ງນີ້ ເປົ້າໝາຍເພື່ອສັກວັກຊີນໃຫ້ເດັກໃນກຸ່ມເປົ້າໝາຍ 1.767 ຄົນໃນທົ່ວເມືອງທີ່ມີອາຍຸ 9-59 ເດືອນ ເພື່ອສ້າງພູມຄຸ້ມກັນໃຫ້ເດັກ ແນໃສ່ເຮັດໃຫ້ມີສຸຂະພາບແຂງແຮງ. ຮຽກຮ້ອງມາຍັງຜູ້ປົກຄອງໃຫ້ນຳເອົາລູກຫຼານໄປຮັບວັກຊີນຄັ້ງນີ້ຢ່າງກວ້າງຂວາງ ແລະ ທົ່ວເຖິງເປົ້າໝາຍ. ໂອກາດນີ້, ທ່ານຮອງເຈົ້າເມືອງພ້ອມດ້ວຍພາກສ່ວນກ່ຽວຂ້ອງໄດ້ຮ່ວມກັນຢອດຢາວິຕາມິນອາ (A) ແລະ ສັກວັກຊີນກັນພະຍາດໃຫ້ເດັກໃນກຸ່ມເປົ້າໝາຍ ແລະ ຈະສືບຕໍ່ໃຫ້ວັກຊີນກັນພະຍາດດັ່ງກ່າວຢູ່ບັນດາບ້ານໃນທົ່ວເມືອງ ໃຫ້ບັນລຸ 95% ຂຶ້ນໄປ, ການສັກວັກຊີນຈະດຳເນີນໄປເຖິງວັນທີ 30 ພຶດສະພານີ້. (ຂ່າວ-ພາບ: ສຸລິຍາ ແສງເດືອນ)



## ທ່ານ ໂຕເລີມ ສາບານຕົວຂຶ້ນດຳລົງຕຳແໜ່ງປະທານປະເທດ ຫວຽດນາມ



ຂ່າວສານ ຫວຽດນາມ ລາຍງານວ່າ: ໃນວັນ 22 ພຶດສະພານີ້, ພາຍຫຼັງສະພາແຫ່ງຊາດ ຮັບຮອງເອົາມະຕິເລືອກຕັ້ງປະທານປະເທດ, ທ່ານພົນເອກ ໂຕເລີມ ໄດ້ສາບານຕົວຂຶ້ນຮັບຕຳແໜ່ງເປັນປະທານປະເທດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໄລຍະ 2021-2026 ຢ່າງເປັນທາງການ.

ຂ່າວລະບຸວ່າ: ໃນພິທີສາບານຕົວຮັບດຳລົງຕຳແໜ່ງ, ທ່ານພົນເອກ ໂຕເລີມ ກ່າວວ່າ: ພາຍໃຕ້ທຸງສີແດງອັນສັກສິດ ປະດັບດ້ວຍດາວສີເຫຼືອງຂອງປະເທດຊາດ, ຕໍ່ສະພາແຫ່ງຊາດ ແລະ ຜູ້ມີສິດເລືອກຕັ້ງທົ່ວປະເທດ, ຂ້າພະເຈົ້າ, ປະທານປະເທດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໄດ້ ສາບານຕົວວ່າ: ຈະຈົງຮັກພັກດີຕໍ່ປະເທດຊາດ, ປະຊາຊົນ ແລະ ລັດຖະທຳມະນູນ ແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ. ສູ້ຊົນເຮັດໃຫ້ສຳເລັດໜ້າທີ່ທີ່ພັກ, ລັດ ແລະ ປະຊາຊົນໄດ້ມອບໝາຍໃຫ້.

ກ່ອນໜ້ານີ້, ຕາມຜົນການນັບຄະແນນ, ມີຈຳນວນຜູ້ແທນທີ່ເຂົ້າຮ່ວມປ່ອນບັດເຫັນດີ 96,92%, ເທົ່າກັບ 97,13% ຂອງຈຳນວນຜູ້ແທນສະພາແຫ່ງຊາດທີ່ເຂົ້າຮ່ວມການເລືອກຕັ້ງເອົາ ທ່ານ ໂຕເລີມ ດຳລົງຕຳແໜ່ງປະທານປະເທດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

## ປະທານາທິບໍດີ ອີຣານ ເສຍຊີວິດໃນອຸບັດເຫດຍົນຕົກ



ວິທະຍຸກະຈາຍສຽງຫວຽດນາມລາຍງານວ່າ: ໃນວັນທີ 20 ພຶດສະພາຜ່ານມາ, ສື່ມວນຊົນອີຣານ ໄດ້ຢັ້ງຢືນວ່າ: ທ່ານ ອິບຣາຮິມ ໄຣຊີ ປະທານາທິບໍດີອີຣານ ພ້ອມກັບຄະນະຕິດຕາມ. ໃນນັ້ນ, ມີ ທ່ານ ຮໍຊຽນ ອາມີຣ ອັບດໍລລາຫຽນ ລັດຖະມົນຕີການຕ່າງປະເທດ ອີຣານ ເສຍຊີວິດໃນເຫດການຍົນເຮລິຄອບເຕີຕົກຢູ່ບໍລິເວນທາງທິດຕາເວັນຕົກ ພາກເໜືອຂອງປະເທດ.

ຂ່າວລະບຸວ່າ: ທ່ານ ໂມເຊັນ ມານຊູຣີ ຮອງປະທານາທິບໍດີ ອີຣານ ແລະ ສຳນັກຂ່າວສານແຫ່ງລັດ ອີຣານ ຫຼາຍແຫ່ງ (Tasnim, Mehr) ຢັ້ງຢືນຂໍ້ມູນຂ່າວກ່ຽວກັບເຫດການ ທ່ານ ອິບຣາຮິມ ໄຣຊີ ເສຍຊີວິດ ໃນຕອນເຊົ້າວັນທີ 20 ພຶດສະພາຜ່ານມາ, ພາຍຫຼັງຊອກຫາຫຼາຍຊົ່ວໂມງຢູ່ບໍລິເວນທີ່ຍົນຕົກ. ກ່ອນໜ້ານັ້ນ, ໃນຕອນບ່າຍວັນທີ 19 ພຶດສະພາເຮືອບິນເຮລິຄອບເຕີໂດຍສານຂອງທ່ານປະທານາທິບໍດີອີຣານພ້ອມກັບຄະນະຕິດຕາມ. ໄດ້ຂາດການຕິດຕໍ່ສື່ສານໃນຂະນະພວມເດີນທາງຈາກ ໂຄດາ ອາຟາຣິນ ໄປເມືອງເອກຂອງແຂວງທາບຣິສ.

## ສາຍການບິນຊາອຸເດຍ ແອລາຍ ປະກາດຂໍ້ຕົກລົງຊື້ເຮືອບິນ ແອບັສ 105 ລຳ

ຂ່າວຕ່າງປະເທດລາຍງານໃນວັນທີ 21 ພຶດສະພາຜ່ານມາວ່າ: ຊາອຸເດຍ ແອລາຍ (Saudia Airlines) ສາຍການບິນລະດັບຊາດຂອງ ຊາອຸດິດ ອາຣາບີ ປະກາດຂໍ້ຕົກລົງຊື້ເຮືອບິນແອບັສ ຈຳນວນ 105 ລຳ, ລຸ້ນແອບັສ ເອ320 ນີໂອ (A320neo) ແລະ ເອ321 ນີໂອ (A321neo).

ສາຍການບິນດັ່ງກ່າວ ໄດ້ປະກາດຂໍ້ຕົກລົງໃນກອງປະຊຸມເວທີການບິນເພື່ອອະນາຄົດ ທີ່ນະຄອນຫຼວງຣີຢາດ ຂໍ້ຕົກລົງນີ້ມີຈຸດປະສົງເພື່ອຂະຫຍາຍ ແລະ ປັບປຸງການບິນໃຫ້ທັນສະໄໝ ແລະ ເພີ່ມການເຊື່ອມຕໍ່ທາງອາກາດກັບປະເທດຕ່າງໆທົ່ວໂລກ.

ທ່ານ ອິບຣາຮິມ ອັລ-ໂອມາຣ ຜູ້ອຳນວຍການທົ່ວໄປຂອງຊາອຸເດຍ ກຣຸບ (Saudia Group) ກ່າວວ່າ: ຊາອຸເດຍ ຕ້ອງການຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນ, ໃນຂະນະທີ່ຄວາມກ້າວໜ້າຂອງແຜນລິເລີ່ມວິໄສທັດຂອງຊາອຸດິດ ອາຣາບີ ປີ 2030 ກຳລັງດຶງດູດຜູ້ມາຢ້ຽມຢາມ, ນັກທ່ອງທ່ຽວ, ຜູ້ປະກອບການ ແລະ ຜູ້ສະແຫວງບຸນເພີ່ມຫຼາຍຂຶ້ນໃນແຕ່ລະປີ.

ທ່ານ ຊາເລ ອັລ-ຈັສເຊີ ລັດຖະມົນຕີກະຊວງຄົມມະນາຄົມ ແລະ ການຂົນສົ່ງຂອງຊາອຸດິດ ອາຣາບີ ກ່າວວ່າ: ແລະ ຂໍ້ຕົກລົງຂອງ ການປະຊຸມດັ່ງກ່າວຈະມີບົດ ບາດສຳຄັນໃນການເສີມຂະ ຫຍາຍຄວາມພະຍາຍາມທີ່ຈະຕອບສະໜອງຕໍ່ຄວາມທ້າທາຍໃໝ່ໃນພາກສ່ວນການບິນ.

ທ່ານ ຊາເລ ອັລ - ຈັສເຊີ ຍັງກ່າວເຖິງການຈັດຕັ້ງສາຍການບິນຣີຢາດ ແອ (Riyadh Air) ຊຶ່ງຈະເຊື່ອມຕໍ່ນະຄອນຫຼວງຣີຢາດ ກັບຈຸດໝາຍລະຫວ່າງປະເທດຫຼາຍກວ່າ 100 ແຫ່ງ ລວມທັງແຜນການໂຄງການສະໜາມບິນນາໆຊາດຄິງຊັລມານ ໃນຣີຢາດ ຊຶ່ງຈະເພີ່ມຂີດຄວາມສາມາດໃນການຮອງຮັບຜູ້ໂດຍສານທາງອາກາດ ຈຳນວນ 100 ລ້ານຄົນ ພາຍໃນປີ 2030.

ກອງປະຊຸມຈັດໂດຍສຳນັກງານການບິນພົນລະເຮືອນແຫ່ງຊາອຸດິດ ອາຣາບີ ໂດຍມີລັດຖະມົນຕີ 30 ກວ່າທ່ານ, ຫົວໜ້າໜ່ວຍງານ ການບິນພົນລະເຮືອນ ແລະ ສາຍການບິນລະຫວ່າງປະເທດ 77 ທ່ານ ຕະຫຼອດຈົນຜູ້ຊ່ຽວຊານ ແລະ ຜູ້ນຳໃຊ້ອຸດສາຫະກຳການບິນຫຼາຍກວ່າ 5.000 ທ່ານ ຈາກ 120 ກວ່າ ປະເທດເຂົ້າຮ່ວມ.

## ການຄ້າກຳປູເຈຍ RECP ເພີ່ມຂຶ້ນ 13,9%

ຂ່າວຕ່າງປະເທດລາຍງານ ຫວ່າງບໍ່ດົນມານີ້, ກະຊວງການຄ້າກຳປູເຈຍເປີດເຜີຍວ່າ: ການຄ້າກັບປະເທດສະມາຊິກສັນຍາການພົວພັນຄູ່ຮ່ວມເສດຖະກິດຮອບດ້ານໃນພາກພື້ນ (RECP) ຂອງກຳປູເຈຍມີມູນຄ່າ 11,19 ຕື້ໂດລາ ໃນໄລຍະ 4 ເດືອນທຳອິດຂອງປີ 2024 ເພີ່ມຂຶ້ນ 13,9% ຈາກໄລຍະດຽວກັນຂອງປີຜ່ານມາ 9,82 ຕື້ໂດລາ.

ລາຍງານລະບຸວ່າ: ປະລິມານການຄ້າຂອງກຳປູເຈຍກັບປະເທດສະມາຊິກ RECP ມີ 66,2% ຂອງປະລິມານການຄ້າລວມຂອງປະເທດ ລະຫວ່າງເດືອນມັງກອນ - ເມສາ ປີ 2024 ຊຶ່ງມີມູນຄ່າ 16,9 ຕື້ໂດລາ.

ກຳປູເຈຍ ສົ່ງອອກຜະລິດຕະພັນໄປຍັງປະເທດສະມາຊິກ RECP ມູນຄ່າ 3,36 ຕື້ໂດລາ ໃນໄລຍະ 4 ເດືອນທຳອິດ ເພີ່ມຂຶ້ນ 16,2% ຈາກປີກ່ອນ. ຂະນະດຽວກັນ, ກຳປູເຈຍນຳເຂົ້າສິນຄ້າຈາກປະເທດສະມາຊິກ RECP ມູນຄ່າ 7,83 ຕື້ໂດລາ ເພີ່ມຂຶ້ນ 13% ເມື່ອທຽບເປັນປີຕໍ່ປີ. ປະເທດສະມາຊິກ RECP ທີ່ເປັນຄູ່ຄ້າລາຍໃຫຍ່ 5 ອັນດັບທຳອິດຂອງກຳປູເຈຍ ໄດ້ແກ່ ຈີນ, ຫວຽດນາມ, ໄທ, ຍີ່ປຸ່ນ ແລະ ສິງກະໂປ.

ທ່ານ ເພັນ ໂສວິຈິດ ເລຂາທິການ ແລະ ໂຄສົກກະຊວງການຄ້າ ກຳປູເຈຍ ກ່າວວ່າ: RECP ເປັນຕົວເລັ່ງການເຕີບໂຕທາງການຄ້າຂອງກຳປູເຈຍ ແລະ ເປັນແມ່ເຫຼັກດຶງດູດການລົງທຶນໂດຍກົງຈາກຕ່າງປະເທດໃຫ້ເພີ່ມຫຼາຍຂຶ້ນ, ພ້ອມກ່າວຕື່ມວ່າ: ເຖິງແມ່ນວ່າການກີດກັ້ນທາງການຄ້າຈະເພີ່ມຂຶ້ນ ແລະ ການສະໜອງທົ່ວໂລກຈະຫຼຸດລົງ ແຕ່ RECP ໄດ້ເສີມສ້າງຄວາມຮ່ວມມືທາງການຄ້າລະດັບພາກພື້ນ ແລະ ນຳເອົາຜົນປະໂຫຍດມະຫາສານມາສູ່ປະເທດສະມາຊິກ ຕະຫຼອດຈົນສົ່ງເສີມໃຫ້ການຄ້າຂອງພາກພື້ນເຕີບໃຫຍ່ຢ່າງຍືນຍົງໃນໄລຍະຍາວ ແລະ ມີສ່ວນເສີມສ້າງສັນຕິພາບ, ສະຖຽນລະພາບ, ຄວາມກົມກຽວ, ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນ.

RECP ມີຜົນບັງຄັບໃຊ້ໃນປີ 2022 ມີສະມາຊິກ 15 ປະເທດໃນພາກພື້ນອາຊີ - ປາຊີຟິກປະກອບດ້ວຍ 10 ປະເທດສະມາຊິກຂອງອາຊຽນ ກັບປະເທດຄູ່ພາຄີອີກ 5 ປະເທດ ໄດ້ແກ່ ຈີນ, ຍີ່ປຸ່ນ, ສ ເກົາຫຼີ, ອົສຕຣາລີ ແລະ ນູແວນເຊລັງ.

## ສີລັງກາ ຈະນຳໃຊ້ AI ສ້າງກະເສດທັນສະໄໝ



ຂ່າວຕ່າງປະເທດລາຍງານ ເມື່ອບໍ່ດົນມານີ້, ທ່ານ ຣານິນ ວິກົມສິງຫະ ປະທານາທິບໍດີສີລັງກາ ກ່າວວ່າ: ລັດຖະບານວາງແຜນປ່ຽນຜ່ານພາກການກະເສດຂອງປະເທດ ໂດຍຈະນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຊັ່ນ: ປັນຍາປະດິດ (AI) ແລະ ຈະສະໜັບສະໜູນຜູ້ປະກອບການພາກເອກະຊົນທີ່ສົນໃຈໃນແຜນລິເລີ່ມດັ່ງກ່າວ.

ຂ່າວລະບຸວ່າ: ໃນຖະແຫຼງການຈາກຫ້ອງການປະຊາສຳພັນ ຂອງປະທານາທິບໍດີສີລັງກາ (PMD) ເປີດເຜີຍວ່າ: ມີ 100 ເມືອງທີ່ໄດ້ຮັບການຄັດເລືອກສຳລັບໂຄງການປັບປຸງການເຮັດການກະເສດໃຫ້ທັນສະໄໝໃນປີນີ້. ໃນໄລຍະທຳອິດຈະມີ 25 ເມືອງຈະໄດ້ຮັບສິ່ງອຳນວຍຄວາມສະດວກທີ່ຈຳເປັນ ກ່ອນຈະຂະຫຍາຍຄອບຄຸມໄປອີກ 75 ເມືອງ ໃນໄລຍະທີສອງ.

ທ່ານ ຣານິນ ວິກົມສິງຫະ ເນັ້ນວ່າ: ລັດຖະບານສີລັງກາຈະເອົາໃຈໃສ່ສົ່ງເສີມການກະເສດທັນສະໄໝຢູ່ສີລັງກາ ແລະ ຍິນດີໃຫ້ການສະໜັບສະໜູນການເງິນທີ່ຈຳເປັນ ແລະ ຈັດຝຶກອົບຮົມທີ່ກ່ຽວຂ້ອງ.

ທ່ານປະທານາທິບໍດີສີລັງກາ ຍັງໄດ້ເປີດເຜີຍແຜນການດັ່ງກ່າວລະຫວ່າງການເດີນທາງຢ້ຽມຢາມບໍລິສັດທີ່ນຳໃຊ້ເຕັກໂນໂລຊີປັນຍາປະດິດເຂົ້າໃນວຽກງານດ້ານການກະເສດແຫ່ງທຳອິດໃນສີລັງກາ.

**ພົວພັນນັກຂ່າວ ໂທ: 021 336118**
**021 336119, ເບີແຟັກຂ່າວ: 021 336113**

## ສິງກະໂປ ຈະສົ່ງເຈົ້າໜ້າທີ່ໄປບາງກອກ ເພື່ອສືບສວນເຫດການຍົນທີ່ປະສົບໄພ



ຂ່າວສານ ຫວຽດນາມ ລາຍງານວ່າ: ໃນວັນທີ 21 ພຶດສະພາ ຜ່ານມາ ສິງກະໂປ ຈະສົ່ງເຈົ້າໜ້າທີ່ສືບສວນໄປບາງກອກ (ໄທ) ພາຍຫຼັງເກີດເຫດການຍົນໂດຍສານຖ້ຽວບິນ SQ321 ຂອງບໍລິສັດການບິນສິງກະໂປ ປະສົບຄວາມປັ່ນປ່ວນຂອງອາກາດ, ເຮັດໃຫ້ມີຜູ້ໂດຍສານບາດເຈັບ ແລະ ເສຍຊີວິດ.

ຂ່າວລະບຸວ່າ: ຖະແຫຼງການຂອງກະຊວງຄົມມະນາຄົມຂອງ ສິງກະໂປ ກ່າວວ່າ: ຖ້ຽວບິນ SQ321 ຕ້ອງລົງຈອດສຸກເສີນຢູ່ສະໜາມບິນສຸວັນນະພູມ ໃນບາງກອກ ຫຼັງຈາກເກີດເຫດ. ກົມສືບສວນຄວາມປອດໄພການຈະລາຈອນ (TSIB) ກຳລັງຕິດຕໍ່ກັບຄູ່ຮ່ວມມືຂອງໄທ ແລະ ຈະສົ່ງເຈົ້າໜ້າທີ່ສືບສວນໄປບາງກອກ.

ກ່າວຄຳເຫັນໃນກອງປະຊຸມຂ່າວ, ທ່ານ ກິຕິພົງ ກິຕິກະຈັນ ຜູ້ອຳນວຍການໃຫຍ່ສະໜາມບິນສຸວັນນະພູມ ກ່າວວ່າ: ເຫດການດັ່ງກ່າວມີຜູ້ເສຍຊີວິດ 1 ຄົນ ຊຶ່ງແມ່ນຄົນສັນຊາດອັງກິດ ອາຍຸ 73 ປີ ອາດຈະເປັນພະຍາດຫົວໃຈ. ໃນຈຳນວນ 30 ຄົນທີ່ໄດ້ຮັບບາດເຈັບ, ມີ 7 ຄົນໄດ້ຮັບບາດເຈັບສາຫັດ.

ເຮືອບິນ Boeing 777-300R ໄດ້ອອກເດີນທາງຈາກລອນດອນ (ອັງກິດ) ໄປສິງກະໂປ. ເຫດການດັ່ງກ່າວໄດ້ເກີດຂຶ້ນເມື່ອຍົນລຳນີ້ອອກຈາກຈຸດໝາຍປາຍທາງປະມານ 3 ຊົ່ວໂມງ.

ຜູ້ຜະລິດເຮືອບິນ Boeing ຂອງ ອາເມຣິກາ ກ່າວວ່າ: ທາງບໍລິສັດກຳລັງຕິດຕໍ່ກັບສາຍການບິນສິງກະໂປກ່ຽວກັບຖ້ຽວບິນ SQ321 ແລະ ພ້ອມທີ່ຈະໃຫ້ການຊ່ວຍເຫຼືອ.

## ເອີຣົບ ຮັບຮອງເອົາສັນຍາທົ່ວໂລກ ສະບັບທຳອິດ ກ່ຽວກັບການຄຸ້ມຄອງ AI

ວິທະຍຸກະຈາຍສຽງຫວຽດນາມລາຍງານວ່າ: ເມື່ອບໍ່ດົນມານີ້, ຄະນະກຳມະການເອີຣົບ (EC) ໄດ້ພົບປະ 46 ປະເທດສະມາຊິກ ຢູ່ ເອີຣົບ, ໃນນັ້ນ ມີຫຼາຍປະເທດບໍ່ເປັນສະມາຊິກຂອງ ສະຫະພາບເອີຣົບ (EU) ໄດ້ຮັບຮອງເອົາສົນທິສັນຍາທົ່ວໂລກສະບັບທຳອິດທີ່ມີລັກສະນະຜູກມັດສຳລັບດ້ານນິຕິກຳທີ່ກ່ຽວຂ້ອງເຖິງຂໍ້ກຳນົດຕ່າງໆໃນການຄຸ້ມຄອງການນຳໃຊ້ປັນຍາປະດິດ (AI).

ຂ່າວລະບຸວ່າ: ໃນຖະແຫຼງການສະບັບໜຶ່ງ, EC ໃຫ້ຮູ້ວ່າ, ສົນທິສັນຍາແມ່ກ່ຽວກັບ AI ໄດ້ວາງກອບນິຕິກຳສຳລັບທຸກໄລຍະໃນວົງວັດການພັດທະນາ ແລະ ນຳໃຊ້ບັນດາລະບົບ AI, ພ້ອມທັງແກ້ໄຂບັນດາຄວາມສ່ຽງແອບແຝງຂອງ AI ແລະ ຊຸກຍູ້ການປ່ຽນໃໝ່ເຕັກໂນໂລຊີຢ່າງມີຄວາມຮັບຜິດຊອບ. ໂດຍຕ່າງກັບກົດໝາຍວ່າດ້ວຍປັນຍາປະດິດຂອງ ສະຫະພາບເອີຣົບ (EU), ບັນດາປະເທດທີ່ບໍ່ນອນໃນທະວີບເອີຣົບ ກໍສາມາດເຂົ້າຮ່ວມສົນທິສັນຍາສະບັບດັ່ງກ່າວຂອງ ເອີຣົບໄດ້. ສົນທິສັນຍາສະບັບດັ່ງກ່າວໄດ້ຮັບການຮັບຮອງໃນກອງປະຊຸມປະຈຳປີຂອງຄະນະກຳມະການລັດຖະມົນຕີ EC, ດ້ວຍການເຂົ້າຮ່ວມຂອງບັນດາລັດຖະມົນຕີການຕ່າງປະເທດຂອງ 46 ປະເທດສະມາຊິກ.



**ຕ້ອງການສົ່ງຂ່າວເຖິງໜັງສືພິມ ປະຊາຊົນ ທີ່**
**pasaxonn@yahoo.com**

# ນັກກິລາເພາະກາຍລາວ ຍາດໄດ້ 5 ຫຼຽນຄຳ ຊິງແຊ້ມອາຊຽນ ຄັ້ງທີ 18



ທີມນັກກິລາເພາະກາຍທີມຊາດລາວ ຈຳນວນ 30 ກວ່າຄົນ ສາມາດສ້າງຜົນງານພົ້ນເດັ່ນ ຍາດໄດ້ 5 ຫຼຽນຄຳ, 4 ຫຼຽນເງິນ ແລະ 13 ຫຼຽນທອງ ລວມ 22 ຫຼຽນ ສ້າງປະຫວັດສາດໜ້າໃໝ່ໃຫ້ວົງການກິລາເພາະກາຍລາວ ໃນການແຂ່ງຂັນກິລາເພາະກາຍລາຍການຊິງແຊ້ມອາຊີຕະເວັນອອກສ່ຽງໃຕ້ ຫຼື ອາຊຽນ ຄັ້ງທີ 18 ທີ່ ສປປ ລາວ ຮັບກຽດເປັນເຈົ້າພາບ ໄດ້ຈັດຂຶ້ນທີ່ໂຮງແຮມດອນຈັນພາເລດ ນະຄອນຫຼວງວຽງຈັນ ເມື່ອບໍ່ດົນມານີ້ໃຫ້ກຽດເປີດພິທີຮ່ວມ ໂດຍມີທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຮອງປະທານຄະນະກຳມະການໂອແລັມປິກແຫ່ງຊາດລາວ, ທ່ານ ມະໂນທອງ ວົງໄຊ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ປະທານສະຫະພັນກິລາເພາະກາຍແຫ່ງຊາດລາວ ແລະ ທ່ານ ດາໂຕະ ພໍຊິວ ປະທານສະຫະພັນກິລາເພາະກາຍ ແລະ ຟິດເນັດ ໂລກ, ພ້ອມດ້ວຍຄະນະບໍລິຫານງານສະຫະພັນເພາະກາຍອາຊຽນ ແລະ ອາຊີເຂົ້າຮ່ວມ.

ໂອກາດນີ້, ທ່ານ ມະໂນທອງ ວົງໄຊ ກ່າວວ່າ: ການແຂ່ງຂັນກິລາເພາະກາຍອາຊຽນຄັ້ງນີ້ ເປັນຄັ້ງທຳອິດທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບ ຊຶ່ງເປັນໂອກາດທີ່ດີໃນການສະແດງເຖິງສັກຍະພາບຄວາມສາມາດໃນການເປັນເຈົ້າພາບຈັດງານລະດັບພາກພື້ນ ແລະ ຕໍ່ຍອດສູ່ການເປັນເຈົ້າພາບລະດັບສາກົນ. ພ້ອມກັນນີ້, ກໍເປັນການສ້າງແຮງຈູງໃຈໃຫ້ນັກກິລາສະໝັກຫຼິ້ນ ຫຼື ກຳລັງສົນໃຈກິລາປະເພດນີ້ ຫັນມາຫຼິ້ນກິລານີ້ໃຫ້ຫຼາຍຂຶ້ນ. ປີນີ້ ກໍເປັນປີທ່ອງທ່ຽວລາວ ແລະ ສປປ ລາວ ເປັນປະທານອາຊຽນ ເປັນການສ້າງກິດຈະກຳທີ່ດີ ເພື່ອດຶງດູດການທ່ອງທ່ຽວ ແລະ ຍົກສູງບົດບາດຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນຢ່າງກວ້າງຂວາງ.

ການແຂ່ງຂັນ ມີການຊິງໄຊ 2 ປະເພດຄື: ປະເພດເພາະກາຍ (Bodybuilding) ແລະ ປະເພດຫຸ່ນສວຍງາມ (Physique sport ແລະ Model Physique), ມີການຊິງໄຊເອົາຫຼຽນທັງໝົດ 75 ຫຼຽນ. ໃນນັ້ນ, ປະກອບມີ 25 ຫຼຽນຄຳ, 25 ຫຼຽນເງິນ ແລະ 25 ຫຼຽນທອງ ມີນັກກິລາເຂົ້າຮ່ວມ 153 ຄົນ ຈາກ 8 ປະເທດ ໃນຂົງເຂດອາຊຽນ (ບໍ່ມີປະເທດຕີມໍ ແລັສເຕ, ປະເທດບຣູໄນ ແລະ ປະເທດຟີລິບປິນ) ເຂົ້າຮ່ວມ. ສຳລັບເຈົ້າພາບ ສປປ ລາວ ສົ່ງນັກກິລາເຂົ້າຮ່ວມ 32 ຄົນ.

ຜ່ານການແຂ່ງຂັນ ນັກກິລາເພາະກາຍທີມຊາດລາວ ສາມາດຍາດມາໄດ້ 5 ຫຼຽນຄຳ, 4 ຫຼຽນເງິນ ແລະ 13 ຫຼຽນທອງ ຊຶ່ງ 5 ຫຼຽນຄຳ ໄດ້ຈາກ: ທ້າວ ຄຳລິ່ງ ຈະເລີນ ປະເພດເພາະກາຍ ນ້ຳໜັກ 70 ກິໂລກຣາມ, ທ້າວ ອິນກອນ ສີວິໄລ ເພາະກາຍ ນ້ຳໜັກ 55 ກິໂລກຣາມ, ທ້າວ ແກ້ວຕາ ພະພິລົມລາສັກ ປະເພດຫຸ່ນງາມ ຄວາມສູງ 165 ຊັງຕີແມັດ, ນາງ ຈິນຕະນາ ຄຳບຸນເຮືອງ ປະເພດຫຸ່ນງາມ ຄວາມສູງ 165 ຊັງຕີແມັດ ແລະ ອີກ 1 ຫຼຽນຄຳ ໄດ້ຈາກ ນາງ ຈິນຕະນາ ຄຳບຸນເຮືອງ ປະເພດຫຸ່ນງາມ ອາຍຸ 35 ປີຂຶ້ນໄປ, ສ່ວນ 4 ຫຼຽນເງິນ ໄດ້ຈາກ: ທ້າວ ຄຳຫຼ້າ ສາມະວົງ ຮຸ່ນໂອເພັນ, ທ້າວ ປົ່ງ ລາດວົງ ປະເພດເພາະກາຍ ອາຍຸ 50-60 ປີ, ທ້າວ ສອນພວງ ຄຳວົງແສງປະເພດຫຸ່ນງາມຄວາມສູງ 175 ຊັງຕີແມັດຂຶ້ນໄປ ແລະ ນາງ ເພັດສະລາ ພັນນະສານ ປະເພດຫຸ່ນງາມ ຄວາມສູງ 155 ຊັງຕີແມັດ ແລະ 13 ຫຼຽນທອງ ໄດ້ຈາກ: ນາງ ວອນມະນີ ໄຊຍະສານ, ນາງ ຊີຕ້າ ທອງສຸລິນ, ນາງ ສົມມະນິນ ພານຸສິດ, ທ້າວ ສຸລິຍາ ໄຊຍະພອນ, ທ້າວ ສິນປະເສີດ ວົງພັນ, ທ້າວ ສັນຕິສຸກ ດວງແກ້ວມະນີ, ທ້າວ ແສງປະເສີດ ໄຊຍະສິງ, ທ້າວ ອຸ້ຍ ສີວິເສດ, ທ້າວ ພູມີ ສະຫວັດດີໄຊ, ທ້າວ ຂາວພອນ ພອນປະເສີດ, ທ້າວ ອາລຸນໃໝ່ ສີສຸລາດ, ທ້າວ ພູດສະຫວັນ ສີຊົມພູ, ທ້າວ ຄຳຫຼ້າ ສາມະວົງ ແລະ ປະເພດຄູ່ປະສົມ ນາງ ເພັດສະລາ ວັນນະສານ ຄູ່ກັບ ທ້າວ ຄຳຫຼ້າ ສາມະວົງ ແລະ ສະເພາະຄຳຫຼ້າ ສາມະວົງ ສາມາດຍາດໄດ້ມາ 1 ຫຼຽນຄຳ ແລະ 2 ຫຼຽນທອງ. ພ້ອມກັນນີ້, ສປປ ລາວ ກໍຍັງສາມາດຍາດໄດ້ ຫຼຽນຄຳປະເພດທີມຍິງ ສ່ວນຫຼຽນເງິນເປັນຂອງ ຫວຽດນາມ ແລະ ຫຼຽນທອງ ໄທ ,ຂະນະທີ່ ປະເພດທີມຊາຍ ຫຼຽນຄຳ ເປັນຂອງຫວຽດນາມ, ຫຼຽນເງິນ ສປປ ລາວ ແລະ ຫຼຽນທອງ ປະເທດໄທ.

ລາງວັນ Mr. Southeast Asian 2024 champion of champion ລາຍການດັ່ງກ່າວທີ່ກຳນົດເອົານັກກິລາທີ່ໄດ້ຫຼຽນຄຳຈາກ 6 ຮຸ່ນ ມາແຂ່ງຂັນກັນ ຜົນປະກົດວ່າ ທ້າວ ທານະກິດ ພະຈັນທະເສນ ຈາກໄທ ຮຸ່ນນ້ຳໜັກ 75 ກິໂລກຣາມ ຂຶ້ນໄປທີ1.

ສະຫຼຸບຕາຕະລາງຫຼຽນລາງວັນ: ທີ 1 ຫວຽດນາມ ຍາດໄດ້ 10 ຫຼຽນຄຳ, 9 ຫຼຽນເງິນ ແລະ 7 ຫຼຽນທອງ ລວມ 26 ຫຼຽນ, ທີ 2 ໄທ ຍາດໄດ້ 6 ຫຼຽນຄຳ, 2 ຫຼຽນເງິນ ແລະ 1 ຫຼຽນທອງ, ທີ 3 ສປປ ລາວ ຍາດໄດ້ 5 ຫຼຽນຄຳ, 4 ຫຼຽນເງິນ ແລະ 13 ຫຼຽນທອງ, ທີ 4 ມຽນມາ ຍາດໄດ 3 ຫຼຽນຄຳ, 2 ຫຼຽນເງິນ, ທີ 5 ມາເລເຊຍ ຍາດໄດ 1 ຫຼຽນຄຳ, 2 ຫຼຽນເງິນ ແລະ 2 ຫຼຽນທອງ, ທີ 6 ກຳປູເຈຍ ຍາດໄດ 2 ຫຼຽນເງິນ ແລະ ທີ 7 ຮ່ວມ ເປັນຂອງອິນໂດເນເຊຍ ແລະ ສິງກະໂປ ສາມາດຍາດໄດ້ປະເທດລະ 1 ຫຼຽນເງິນ.

(ຂ່າວ: ສິງການ ພັນແພງດີ)




# ກົມຮູບເງົາເຄື່ອນໄຫວສາຍຮູບເງົາ 3 ວັນ ປະຫວັດສາດຢູ່ແຂວງໄຊສົມບູນ

ກົມຮູບເງົາກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ຮ່ວມກັບສູນວັດທະນະທຳຫວຽດນາມປະຈຳລາວ ໄດ້ຈັດກິດຈະກຳສາຍຮູບເງົາເຄື່ອນທີ່ເນື່ອງໃນໂອກາດສະເຫຼີມສະຫຼອງວັນໄຊຊະນະບັ້ນຮົບດຽນບຽນຟູ ຄົບຮອບ 70 ປີ (7/5/1954-7/5/2024) ໃຫ້ປະຊາຊົນຢູ່ເມືອງອະນຸວົງ ແລະ ກອງບັນຊາການທະຫານແຂວງໄຊສົມບູນ ໄດ້ຮັບຊົມ ເມື່ອບໍ່ດົນມານີ້ ນຳພາໂດຍທ່ານ ຄຳເພົ້າ ວັນນະວົງ ຫົວໜ້າກົມຮູບເງົາ, ມີທ່ານ ຫວຽນ ຟູກຊົງ ອຳນວຍການສູນວັດທະນະທຳຫວຽດນາມປະຈຳລາວ, ທ່ານ ທົງສະຫວັນ ໂພສາລາດ ຫົວໜ້າພະແນກ ຖວທ ແຂວງ ພ້ອມດ້ວຍຄະນະພັກ-ຄະນະບັນຊາກອງບັນຊາການທະຫານແຂວງເຂົ້າຮ່ວມ.

ການເຄື່ອນໄຫວສາຍຮູບເງົາຄັ້ງນີ້, ເພື່ອເປັນການສະເຫຼີມສະຫຼອງວັນໄຊຊະນະບັ້ນຮົບດຽນບຽນຟູ ຄົບຮອບ 70 ປີ, ວັນເຊັນສັນຍາເຊີແນວກ່ຽວກັບການຢຸດຕິສົງຄາມ ແລະ ຟື້ນຟູສັນຕິພາບຢູ່ອິນດູຈີນ (21/7/1975-21/7/ 2024) ແລະ ວັນປົດປ່ອຍພາກໃຕ້ຫວຽດນາມ ຄົບຮອບ 49 ປີ (30/4/1975-30/4/2024) ເພື່ອທວນຄືນມູນເຊື້ອວັນສຳຄັນຂອງພັກ-ຂອງຊາດ ທັງນີ້ເພື່ອໃຫ້ພະນັກງານ-ນັກຮົບ ກໍຄືປະຊາຊົນ, ນັກຮຽນໄດ້ຮັບຮູ້ເຂົ້າໃຈແຈ້ງ, ຮູ້ໄດ້ຄວາມໝາຍຄວາມສຳຄັນຂອງປະຫວັດການເຄື່ອນໄຫວຂອງຜູ້ນຳພັກ-ລັດແລະມູນເຊື້ອອັນດີງາມຂອງກົມກອງ ໃນການເຄື່ອນໄຫວເຮັດໜ້າທີ່ການປະຕິວັດຕໍ່ສູ້ກູ້ຊາດຢ່າງອົງອາດກ້າຫານ, ເດັດດ່ຽວ, ໝຽວແໜ້ນ, ບໍ່ຍອມຈຳນົນ, ບໍ່ຫວັ່ນໄຫວຄອນແຄນຕໍ່ອຸປະສັກ, ມີມານະຈິດອິດທົນຜ່ານຜ່າຄວາມຫຍຸ້ງຍາກນາໆປະການ, ມີນ້ຳໃຈດຸໝັ່ນຂະຫຍັນພຽນໃນການອອກແຮງງານຊ່ວຍເຫຼືອປະຊາຊົນບັນດາເຜົ່າຢ່າງກົມກຽວ, ມີນ້ຳໃຈເສຍສະຫຼະອັນສູງສົ່ງເພື່ອຊາດ, ເພື່ອປະຊາຊົນ, ເພື່ອອຸດົມການສັງຄົມນິຍົມ ໂດຍພາຍໃຕ້ການນຳພາຂອງພັກອັນສະຫຼາດສ່ອງໃສ ຈຶ່ງສາມາດນຳພາປະຊາຊົນບັນດາເຜົ່າຫຼຸດພົ້ນອອກຈາກແອກຄອບຄອງຂອງພວກຈັກກະພັດຕ່າງດ້າວກ້າວຂຶ້ນສູ່ການສະຖາປະນາຊາດຂອງຕົນຂຶ້ນຢ່າງສະຫງ່າຜ່າເຜີຍ. ນອກຈາກນີ້, ເພື່ອໃຫ້ນັກຮຽນຮູ້ເຖິງຜົນຮ້າຍຂອງການປະລະການຮຽນ ພ້ອມທັງເປັນການຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເອົາໃຈໃສ່ໃນການຮ່ຳຮຽນ ເພື່ອເປັນຜູ້ສືບທອດຂອງປະເທດໃນຕໍ່ໜ້າ.

(ຂ່າວ: ແກ່ນຈັນ ທຳມະນີ)




ຜູ້ຊີ້ນຳ
ທ່ານ ວັນໄຊ ຕະວິນຍານ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ຫົວໜ້າບັນນາທິການໃຫຍ່ໜັງສືພິມປະຊາຊົນ (020) 55668332
ຮອງຫົວໜ້າບັນນາທິການໃຫຍ່ ທ່ານ ສີວັນ ທອນໄຊຍະເດດ (020) 55413454
ຫົວໜ້າພະແນກບັນນາທິການຂ່າວການເມືອງ- ເສດຖະກິດ ທ່ານ ຄຳເຮືອງ ຄຳປະສິດ (020) 56431159 (021) 336119
ຫົວໜ້າພະແນກບັນນາທິການຂ່າວວັດທະນະທຳ - ສັງຄົມ ທ່ານ ຕຸໄລເພັດ ພົມເມືອງ (020) 22240119 (021) 336118
ຮັກສາການຫົວໜ້າພະແນກບັນນາທິການຂ່າວຕ່າງປະເທດ ແລະ ໜັງສືພິມ ເອເລັກໂຕຣນິກ ທ່ານນາງ ຈັນທະລາ ໄຊຍະເຫຼັກ (020) 55658399
ຫົວໜ້າພະແນກ ເຕັກນິກ - ຈັດໜ້າ ແລະ ກວດແກ້ ທ່ານນາງ ທອງດຳ ລິດອຸທຸມ (020) 52233864
ຫົວໜ້າພະແນກຄຸ້ມຄອງ ໂຄສະນາ ແລະ ຈຳໜ່າຍ ທ່ານ ນາງ ມາລາຄອນ ອູບຄຳ (021) 336111 Fax: (021) 336112